#TEAMEUROPE

ລາຍງານຄວາມຄືບໜ້າ ໂດຍຫຍໍ້
ຫົວຂໍ້: ປ່າໄມ້ & ລາຍງານ ໂຄງການ ProFEB

ທ່ານ ສີປະໄພ ໄຊສົງຄາມ, ຫົວໜ້າກົມ ກວດກາ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ

ກອງປະຊຸມ ໂຄງການ ເພີ່ມທະວີການຄ້າ, ການລົງທຶນ ແລະ ການເຊື່ອມໂຍງແບບຍືນຍົງ ແລະ ທົ່ວເຖິງ ໃນຂະແໜງກະສິກາ ແລະ ປ່າໄມ້ (TICAF) ປະຈຳປີ ຄັ້ງທີ 2
13 ພຶດສະພາ 2026, ໂຮງແຮມ ຣໍລິເຄອິນ, ນະຄອນຫຼວງວຽງຈັນ

german cooperation
DEUTSCHE ZUSAMMENARBEIT

Co-funded by the European Union

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

ບັນດາຜົນສຳເລັດຫຼັກໃນປີ 2025-2026

- **ອຸທິຍານແຫ່ງຊາດ ຫີນໝາມໝໍ່ ໄດ້ຮັບການຈົດທະບຽນເປັນມໍຣະດົກໂລກທາງທຳມະຊາດ ໂດຍອົງການ UNESCO** ໃນເດືອນ ກໍລະກົດ 2025, ເຊິ່ງເປັນແຫຼ່ງມໍຣະດົກໂລກຮ່ວມຊາຍແດນ ແຫ່ງທຳອິດໃນ ອາຊີຕາເວັນອອກສ່ຽງໃຕ້ ທີ່ຮ່ວມກັບ ມໍຣະດົກໂລກ ຟອງຍາແກບາງຂອງ ສສ ຫວຽດນາມ.

- **ພວກເຮົາໄດ້ເປີດຕົວ ໂຄງການທຶນການສຶກສາດ້ານປ່າໄມ້, ໂດຍມອບທຶນການສຶກສາຈຳນວນ 100 ທຶນ** ໃຫ້ ແກ່ນັກສຶກສາໃນ 3 ມະຫາວິທະຍາໄລ, ໃນນັ້ນມີນັກສຶກສາຍິງກວມເອົາ 78% ໃນຈຳນວນ ນັກສຶກສາ ລະດັບ ປະລິນຍາຕີ.

- **ໄດ້ຄັດເລືອກເອົາ 14 ທີມ ທີ່ຊະນະເລີດຈາກການແຂ່ງຂັນນະວັດຕະກຳ** ເຊິ່ງໄດ້ຮັບທຶນສະໜັບສະໜູນ ເປັນ ມູນຄ່າ 173,000 ໂດລາ ເພື່ອປັບປຸງ ການປຸງແຕ່ງໄມ້ ແລະ ຕ່ອງໂສ້ມູນຄ່າເພີ່ມ ຜະລິດຕະພັນເຄື່ອງປ່າ ຂອງດົງໃຫ້ທັນສະໄໝ.

- **ລັດຖະບານໄດ້ຮັບຮອງເອົາ ດຳລັດ ວ່າດ້ວຍຢາງພາລາ ຢ່າງເປັນທາງການໃນ ເດືອນ ເມສາ 2026**, ເຊິ່ງສ້າງ ກອບລະບຽບການ ສຳລັບ ການນຳໃຊ້ໄມ້ຢາງພາລາແບບຍືນຍົງ.

- **ພວກເຮົາໄດ້ຮ່ວມມື ເປັນຄູ່ຮ່ວມງານ ການຈັດຕັ້ງປະຕິບັດ ວຽກງານການຟື້ນຟູພູມີທັດປ່າໄມ້** ໂດຍໄດ້ລົງນາມ ໃນບົດບັນທຶກຄວາມເຂົ້າໃຈ ຮ່ວມ ກັບບໍລິສັດມິນິໂຮ ໃນວັນທີ 23 ມີນາ ເພື່ອຟື້ນຟູເຂດປ່າພູພຶງ ແລະ ສ້າງລາຍຮັບໃຫ້ແກ່ທ້ອງຖິ່ນແບບຍືນຍົງ.





#TEAMEUROPE

ສິ່ງທ້າທາຍ ແລະ ບົດຮຽນທາງຍຸດທະສາດ

ສິ່ງທ້າທາຍ



ການລວມຕົວຂອງ ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເຂົ້າເປັນ ກະຊວງກະສິກຳ ແລະ ສິ່ງແວດລ້ອມ (ກສລ) ຮຽກຮ້ອງໃຫ້ມີການປັບປຸງໂຄງຮ່າງການຈັດຕັ້ງ ຄືນໃໝ່ຢ່າງຫຼວງຫຼາຍ ແລະ ສົ່ງຜົນໃຫ້ການປະສານງານມີຄວາມຊັກຊ້າ.



ການຮ່າງນິຕິກຳລຸ່ມກົດໝາຍ ສຳລັບ ລະບົບຄ້ຳປະກັນໄມ້ທີ່ຖືກຕ້ອງຕາມກົດ ໝາຍ (TLAS) ແມ່ນມີຄວາມຊັບຊ້ອນ ສຳລັບ ການຈັດຕັ້ງປະຕິບັດໃນ ລະດັບທ້ອງຖິ່ນ.



ອັດຕາເງິນເຟີ້ທີ່ເພີ່ມຂຶ້ນສູງ ແລະ ການອ່ອນຄ່າຂອງເງິນຕາ ໄດ້ສົ່ງຜົນກະທົບ ຕໍ່ຂີດຄວາມສາມາດໃນການລົງທຶນຂອງ ຈຸນລະວິສາຫະກິດ, ວິສະຫະກິດຂະ ໜາດນ້ອຍ ແລະ ຂະໜາດກາງ ໃນຂະແໜງໄມ້.



ກິດຈະກຳຟື້ນຟູປ່າໄມ້ ແມ່ນຂຶ້ນກັບວົງຈອນລະດູການເປັນຫຼັກ, ເຊິ່ງຈຳເປັນ ຕ້ອງມີກອບເວລາການວາງແຜນທີ່ແນ່ນອນ ແລະ ມີຄວາມລະອຽດຊັດເຈນ.

ບົດຮຽນທາງຍຸດທະສາດ



ການປຶກສາຫາລືກັບພາກສ່ວນກ່ຽວຂ້ອງຢ່າງກະຕືລືລົ້ນ ແມ່ນມີຄວາມ ຈຳເປັນຢ່າງຍິ່ງ ສຳລັບ ການປັບປຸງຄວາມເຂົ້າໃຈຕໍ່ກັບກົດໝາຍໃໝ່.



ການວາງແຜນໂດຍຊຸມຊົນເປັນຜູ້ນຳພາ ແມ່ນວິທີດຽວທີ່ຈະຮັບປະກັນ ຄວາມຍືນຍົງໄລຍະຍາວ ຂອງກິດຈະກຳຟື້ນຟູພູມີທັດປ່າໄມ້.



ການປະເມີນຂີດຄວາມສາມາດກ່ອນການຝຶກອົບຮົມ ຈະຊ່ວຍໃຫ້ການ ຮຽນຮູ້ໄດ້ຮັບທີ່ມີປະສິດທິພາບຫຼາຍກວ່າ ການຈັດກອງປະຊຸມແບບ ທົ່ວໄປ.



ການເຊື່ອມໂຍງຄວາມພະຍາຍາມໃນການຟື້ນຟູປ່າ ເຂົ້າກັບຜົນ ປະໂຫຍດໃນການດຳລົງຊີວິດຂອງຊຸມຊົນໂດຍກົງ ຈະຊ່ວຍໃຫ້ເຂົາເຈົ້າ ມີສ່ວນຮ່ວມຫຼາຍຂຶ້ນ.

german cooperation
DEUTSCHE ZUSAMMENARBEIT
Co-funded by the European Union
Implemented by giz

ແຜນຕໍ່ໜ້າ



ພວກເຮົາຈະ ລົງນາມ ແລະ ປະກາດໃຊ້ ແຜນ ງານການຄຸ້ມຄອງຮ່ວມ ສຳລັບ ມໍຣະດົກໂລກ ທາງທຳມະຊາດ ຫີນໜາມໜໍ່ ແລະ ຟອງຍາແກ ບາງ ອົງການ UNESCO ຢ່າງເປັນທາງການ.




ທີມງານ ການແຂ່ງຂັນມະວັດຈະກຳ ທັງ ໝົດ 14 ທີມທີ່ໄດ້ຮັບການຄັດເລືອກ ຈະໄດ້ຮັບການຕິດຕາມ ແລະ ການ ຊ່ວຍເຫຼືອດ້ານວິຊາການຢ່າງໃກ້ຊິດ.



ແຜນດຳເນີນງານຂັ້ນບ້ານ ສຳລັບ ວຽກງານ ການຟື້ນຟູພູມີທັດປ່າໄມ້ ຈະໄດ້ຮັບການ ຂະຫຍາຍໄປສູ່ທັງໝົດ 31 ບ້ານເປົ້າໝາຍ ໂດຍການນຳໃຊ້ ຊຸດອຸປະກອນ ສຳລັບ ການເພາະຊຳ ໃນທ້ອງຖິ່ນ.



ການກະກຽມ ແລະ ຫັນປ່ຽນໄປສູ່ກອບວຽກການຮ່ວມມື ດ້ານປ່າໄມ້ ລະຫວ່າງ ສະຫະພາບເອີຣົບ ແລະ ສປປ ລາວ ໃຫ້ກວ້າງຂວາງ ແລະ ຮອບດ້ານກວ່າເກົ່າ.



ການກະກຽມ ຂະຫຍາຍໄລຍະເວລາ ໂຄງການ ໄປຈົນເຖິງ ເດືອນ ທັນວາ 2028.

#TEAMEUROPE

ขอบใจที่ท่านรับฟัง













german cooperation
DEUTSCHE ZUSAMMENARBEIT

Co-funded by the European Union

Implemented by giz

ໂຄງການປົກປັກຮັກສາ ແລະ ນຳໃຊ້ ລະບົບນິເວດ ປ່າໄມ້ ແລະ ຊີວະນາໆພັນ ໃນ ສປປ ລາວ (ProFEB)

ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

ຮ່ວມໃຫ້ທຶນໂດຍ
ສະຫະພາບ ເອີຣົບ

ຈັດຕັ້ງປະຕິບັດໂດຍ
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

ນະໂຍບາຍປ່າໄມ້

ຕົວຊີ້ວັດຜົນໄດ້ຮັບທີ 1:
ຮູບແບບການປຶກສາຫາລືດ້ານນະໂຍບາຍກັບຫຼາຍພາກສ່ວນ ເພື່ອເສີມສ້າງການຄຸ້ມຄອງປ່າໄມ້ ໄດ້ຖືກນຳໃຊ້.
ຂໍ້ມູນພື້ນຖານ: 0
ຄາດໝາຍ: 2 ຮູບແບບ

ຕົວຊີ້ວັດຜົນໄດ້ຮັບທີ 2:
ຈຳນວນບັນດານະໂຍບາຍ ເພື່ອແກ້ໄຂອຸປະສັກໃນ ການພັດທະນາຕ່ອງໂສ້ມູນຄ່າຜະລິດຕະພັນປ່າໄມ້ ແລະ ຜະລິດຕະພັນທີ່ໄດ້ຈາກປ່າໄມ້ທີ່ຖືກຄັດເລືອກ ໄດ້ຖືກສ້າງຂຶ້ນ ໂດຍຄູ່ຮ່ວມງານຫຼາຍພາກສ່ວນ
ຂໍ້ມູນພື້ນຖານ: 0
ຄາດໝາຍ: 4 ນະໂຍບາຍ

ຕົວຊີ້ວັດຜົນໄດ້ຮັບທີ 3:
ບັນດານະໂຍບາຍ ທີ່ທົດລອງນຳໃຊ້ເຂົ້າໃນການກຳນົດມາດຖານຄວາມຍືນຍົງ ແລະ ຄຸນນະພາບຂອງຜະລິດຕະພັນ ຕາມຕ່ອງໂສ້ມູນຄ່າ.
ຂໍ້ມູນພື້ນຖານ: 0
ຄາດໝາຍ: 4 ນະໂຍບາຍໄດ້ຖືກທົດລອງນຳໃຊ້

ຜົນສຳເລັດອັນພົ້ນເດັ່ນ

- ໄດ້ຈັດກອງປະຊຸມປຶກສາຫາລືດ້ານນະໂຍບາຍປ່າໄມ້ ໃນຫົວຂໍ້: **ຊະນິດໄມ້ ແລະ ເຄື່ອງປ່າຂອງດົງ, ການຟື້ນຟູປ່າໄມ້, ແລະ ການກຽມຄວາມພ້ອມຂອງ ສປປ ລາວ ຕໍ່ລະບຽບການ EUDR**; ເຊິ່ງມີຜູ້ເຂົ້າຮ່ວມຫຼາຍກວ່າ **170 ທ່ານ** ຈາກພາກລັດ, ພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ສະຖາບັນການສຶກສາ ເພື່ອຮ່ວມກັນກຳນົດຂໍ້ສະເໜີແນະທາງດ້ານນະໂຍບາຍທີ່ສຳຄັນ, ລວມທັງການປະກອບຄຳເຫັນໃສ່ ແຜນແມ່ບົດການຟື້ນຟູປ່າໄມ້ ແລະ ບັນຊີລາຍຊື່ໄມ້ ແລະ ເຄື່ອງປ່າຂອງດົງ (ສະບັບປັບປຸງ).

- **ໄດ້ເຂົ້າເປັນສະມາຊິກຂອງ ກຸ່ມວຽກງານຂະແໜງການຍ່ອຍປ່າໄມ້ (FSSWG) ໃນນາມເປັນປະທານຮ່ວມ** ແລະ ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນວຽກງານກອງເລຂາ, ພ້ອມທັງສະໜັບສະໜູນໃນການຈັດ ແລະ ອຳນວຍຄວາມສະດວກໃຫ້ແກ່ກອງປະຊຸມ FSSWG ຈຳນວນ 1 ຄັ້ງ ແລະ ເພີ່ມທະວີການປະສານງານລະຫວ່າງພາກສ່ວນທີ່ກ່ຽວຂ້ອງໃນຂະແໜງການປ່າໄມ້.

- **ໃຫ້ຄຳປຶກສາທາງດ້ານວິຊາການແກ່ພາກລັດ ກ່ຽວກັບການສ້າງ ແລະ ປັບປຸງນິຕິກຳ ແລະ ນະໂຍບາຍກ່ຽວກັບປ່າໄມ້ ຈຳນວນ 12 ສະບັບ (ສຳເລັດແລ້ວ 2 ສະບັບ)**, ເຊິ່ງລວມມີ: ນິຕິກຳໃຕ້ກົດໝາຍ ທີ່ກ່ຽວກັບລະບົບຄ້ຳປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ (TLAS), ແຜນການຈັດຕັ້ງປະຕິບັດຄຳສັ່ງເລກທີ 11/ນຍ ຢູ່ຂັ້ນເມືອງ, ດຳລັດວ່າດ້ວຍ ຢາງພາລາ (ມີຜົນບັງຄັບໃຊ້ໃນເດືອນເມສາ 2026), ແລະ ແຜນພັດທະນາການສົ່ງອອກຂອງຂະແໜງອຸດສາຫະກຳປຸງແຕ່ງໄມ້.

- **ໄດ້ສະໜັບສະໜູນການເຜີຍແຜ່ ດຳລັດ ວ່າດ້ວຍ ຢາງພາລາ** ໂດຍມີຜູ້ເຂົ້າຮ່ວມເຊິ່ງໜ້າຫຼາຍກວ່າ 30 ທ່ານ ແລະ ຜ່ານລະບົບອອນລາຍ 100 ທ່ານ.

- ສຳເລັດການເຜີຍແຜ່ຜົນການສຶກສາຈຳນວນ 2 ສະບັບ ກ່ຽວກັບການກຽມຄວາມພ້ອມຂອງ ສປປ ລາວ **ຕໍ່ກັບລະບຽບການ EUDR, ເຊິ່ງກວມເອົາລະບົບການຕິດຕາມແຫຼ່ງທີ່ມາຂອງສິນຄ້າ ແລະ ຂອບເຂດນິຕິກຳ.**

- ສຳເລັດການເຜີຍແຜ່ເອກະສານ ຄຳຖາມທີ່ຖືກຖາມເປັນປະຈຳ ກ່ຽວກັບ EUDR (ສະບັບພາສາລາວ), ເຊິ່ງລວມມີຫຼາຍກວ່າ **150 ຄຳຖາມ** ເພື່ອສ້າງຄວາມເຂັ້ມແຂງດ້ານຄວາມຮູ້ກ່ຽວກັບ EUDR ໃຫ້ແກ່ບັນດາຄູ່ຮ່ວມງານຈາກພາກລັດ ແລະ ພາກເອກະຊົນ.







ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້

- ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງກັບ ລະບົບຄ້ຳປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ (TLAS) ມີເນື້ອໃນວິຊາການສູງ ແລະ ຂຶ້ນກັບການປະຕິບັດຕົວຈິງຢູ່ພາກສະໜາມ, **ຈຳເປັນຕ້ອງໄດ້ສ້າງນິຕິກຳເຫຼົ່ານີ້ໃຫ້ສອດຄ່ອງ ແລະ ແທດເໝາະກັບຂັ້ນຕອນການເຮັດວຽກຕົວຈິງ.**

- **ການປະສານງານລະຫວ່າງ ຂັ້ນກົມ ແລະ ຂັ້ນແຂວງ ຍັງມີຫຼາຍຂັ້ນຕອນ ແລະ ໃຊ້ເວລາຫຼາຍ ເຮັດໃຫ້ວຽກງານຊັກຊ້າ.** ຈຳເປັນຕ້ອງປັບປຸງກົນໄກການປະສານງານໃໝ່ ເພື່ອໃຫ້ເຮັດວຽກໄດ້ວ່ອງໄວ ແລະ ມີປະສິດທິພາບກວ່າເກົ່າ.

- ເນື່ອງຈາກຄວາມຮູ້ທາງວິຊາການໃນບາງຂົງເຂດຍັງມີຈຳກັດ ແລະ ຊ່ຽວຊານເຂົ້າມາຊ່ວຍວຽກຊັກຊ້າ ເຮັດໃຫ້ການປະເມີນຜົນບໍ່ທັນຕາມກຳນົດ. **ຈຳເປັນຕ້ອງໃຫ້ຊ່ຽວຊານເຂົ້າມາມີສ່ວນຮ່ວມໄວຂຶ້ນ ເພື່ອໃຫ້ວຽກງານດຳເນີນໄປໄດ້ຢ່າງສະດວກ ແລະ ວ່ອງໄວ.**

- **ເນື່ອງຈາກມີຄວາມເລັ່ງດ່ວນໃນການອອກລະບຽບການໃໝ່ ໃຫ້ທັນຕາມກຳນົດເວລາ**, ເຮັດໃຫ້ການກວດກາ ແລະ ການຕັດສິນໃຈບໍ່ໄດ້ລະອຽດຮອບຄອບເທົ່າທີ່ຄວນ. ອາດຈະຕ້ອງໄດ້ກັບມາປັບປຸງຄືນໃໝ່ໃນພາຍຫຼັງ ເຊິ່ງຈະເຮັດໃຫ້ວຽກເພີ່ມ ແລະ ສິ້ນເປືອງງົບປະມານຫຼາຍຂຶ້ນ.

- **ຄວນໃຫ້ຄູ່ຮ່ວມງານມີສ່ວນຮ່ວມຢ່າງຕັ້ງໜ້າຕັ້ງແຕ່ເລີ່ມຕົ້ນ.** ໃນການປະກາດໃຊ້ລະບຽບການ ຫຼື ດຳລັດຕ່າງໆ, ຄວນມີ **ບົດສະຫຼຸບທີ່ເຂົ້າໃຈງ່າຍ ແລະ ເອກະສານຖາມ-ຕອບ (Q&A)** ເພື່ອໃຫ້ສັງຄົມເຂົ້າໃຈເນື້ອໃນຢ່າງຖືກຕ້ອງ ແລະ ປ້ອງກັນການຕີຄວາມໝາຍຜິດ.

- **ຄວາມບໍ່ສອດຄ່ອງທາງດ້ານນິຕິກຳ ແລະ ການແຂ່ງຄວາມຮັບຜິດຊອບຍັງບໍ່ທັນລວມສູນ**, ເຮັດໃຫ້ການຄຸ້ມຄອງປ່າໄມ້ມີຄວາມຫຍຸ້ງຍາກ. ຄວນກຳນົດໜ້າທີ່ໃຫ້ຊັດເຈນ ແລະ ປັບປຸງກົດໝາຍໃຫ້ສອດຄ່ອງເປັນເອກະພາບກັນ.

- ຂໍ້ຍຸ້ງຍາກດ້ານເຕັກນິກ ແລະ ຂໍ້ກຳນົດທາງກົດໝາຍໃນການເລືອກສະຖານທີ່ ເຮັດໃຫ້ເຫັນວ່າ **ຈຳເປັນຕ້ອງມີວິທີການທີ່ຊັດເຈນ ແລະ ການປະເມີນຢ່າງເປັນລະບົບ ເພື່ອໃຫ້ໄດ້ຜົນທີ່ຖືກຕ້ອງ.**

ແນວທາງໃນຕໍ່ໜ້າ

- **ສ້າງລະບຽບການຍ່ອຍກ່ຽວກັບ TLAS ໃຫ້ສຳເລັດ** ໂດຍປັບປຸງຂໍ້ກຳນົດດ້ານເຕັກນິກໃຫ້ແທດເໝາະກັບການເຮັດວຽກຕົວຈິງ (ເຊັ່ນ: ການເກັບກ່ຽວ ແລະ ການປຸງແຕ່ງໄມ້) ພ້ອມທັງຮັບຮອງຂັ້ນຕອນການປະຕິບັດໃຫ້ມີຄວາມຊັດເຈນ.

- **ປັບປຸງການປະສານງານລະຫວ່າງ ຂະແໜງການ ແລະ ຂັ້ນແຂວງ ໃຫ້ກົມກຽວກັນກວ່າເກົ່າ** ເພື່ອໃຫ້ວຽກງານສຳຄັນດຳເນີນໄປຢ່າງມີປະສິດທິພາບ ເຊັ່ນ: ການຝຶກອົບຮົມດ້ານບົດບາດຍິງ-ຊາຍ, ການຈັດຕັ້ງປະຕິບັດແຜນອາດວຽກງານປ່າສະຫງວນແຫ່ງຊາດ (NPA Roadmap) ແລະ ການຈັດຕັ້ງປະຕິບັດຄຳສັ່ງເລກທີ 11 ຂອງນາຍົກລັດຖະມົນຕີ.

- ຈັດກອງປະຊຸມປຶກສາຫາລືກ່ຽວກັບນະໂຍບາຍປ່າໄມ້ໃຫ້ຫຼາຍຂຶ້ນ **ໂດຍເນັ້ນໃສ່ 'ທຸລະກິດໄມ້'** ເພື່ອຮັບຟັງຄຳເຫັນຈາກທຸກຝ່າຍ, ສະຫຼຸບການປະເມີນຜົນ ແລະ ປັບປຸງແຜນອາດການສົ່ງອອກຜະລິດຕະພັນໄມ້ໃຫ້ສົມບູນ. ຄວນລວມເອົາຫົວຂໍ້ ການເງິນດ້ານປ່າໄມ້ (Forest Financing) ເຂົ້າໃນການຫາລື.

- **ຈັດກອງປະຊຸມສຳມະນາລະດັບພາກພື້ນ ກ່ຽວກັບການຟື້ນຟູປ່າໄມ້** ເພື່ອເກັບກຳຄຳເຫັນໃສ່ຮ່າງແຜນແມ່ບົດ, ສັງລວມເອົາຜົນການສຶກສາຈາກເຂດປ່າຜະລິດ ແລະ ສະໜັບສະໜູນການຮັບຮອງແຜນດັ່ງກ່າວ.

- **ສົ່ງເສີມການເປັນຄູ່ຮ່ວມງານດ້ານປ່າໄມ້ລະຫວ່າງ ສປປ ລາວ ແລະ ສະຫະພາບ ເອີຣົບ** ໂດຍການເປັນຕົວຢ່າງປະສານງານໃຫ້ທຸກຝ່າຍໄດ້ຫາລືກັນ, ພ້ອມທັງໃຫ້ຄຳປຶກສາດ້ານເຕັກນິກແກ່ລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ (CSOs) ຢ່າງໃກ້ຊິດ.

- **ຊຸກຍູ້ການຈັດຕັ້ງປະຕິບັດບັນດານິຕິກຳ ແລະ ນະໂຍບາຍທີ່ສຳຄັນ** ເຊັ່ນ: ການຄຸ້ມຄອງປ່າຊຸມໃຊ້ບ້ານ, ການຜັນຂະຫຍາຍຄຳສັ່ງເລກທີ 11, ການຂຶ້ນບັນຊີລາຍຊື່ໄມ້ ແລະ ເຄື່ອງປ່າຂອງດົງ. ນອກຈາກນີ້, ຍັງລວມເຖິງການນຳໃຊ້ຄູ່ມືດ້ານບົດບາດຍິງ-ຊາຍ ເຂົ້າໃນການສ້າງນິຕິກຳ ແລະ ການເຮັດວຽກຕົວຈິງ.

ໂຄງການປົກປັກຮັກສາ ແລະ ນຳໃຊ້ ລະບົບນິເວດ ປ່າໄມ້ ແລະ ຊີວະນາໆພັນ ໃນ ສປປ ລາວ (ProFEB)

ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

ຮ່ວມໃຫ້ທຶນໂດຍ
ສະຫະພາບ ເອີຣົບ

ຈັດຕັ້ງປະຕິບັດໂດຍ
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

ຊີວະນາໆພັນ

ຕົວຊີ້ວັດຜົນໄດ້ຮັບ 2.1:
ແຜນດຳເນີນງານ ສຳລັບການຄຸ້ມຄອງທີ່ເນັ້ນ ບົດບາດຍິງ-ຊາຍ ໃນເຂດອະນຸລັກທຳມະຊາດຮ່ວມຊາຍແດນ ຫີນໜາມໜໍ່ ແລະ ຟອງຍາ-ແກບາງ ໃຫ້ສອດຄ່ອງຕາມມາດຕະຖານ Green List ໄດ້ຮັບການປະສານງານ ແລະ ເຫັນດີຮ່ວມກັນລະຫວ່າງ ລາວ ແລະ ຫວຽດນາມ. (ຈຳນວນ 1 ແຜນດຳເນີນງານ)

ຕົວຊີ້ວັດຜົນໄດ້ຮັບ 2.2:
ແຜນດຳເນີນງານເພື່ອສະກັດກັ້ນການຄ້າຂາຍສັດປ່າຜິດກົດໝາຍ, ເຊິ່ງລວມມີມາດຕະການແບບມີສ່ວນຮ່ວມ ແລະ ເນັ້ນບົດບາດຍິງ-ຊາຍ, ໄດ້ຮັບການເຫັນດີຈາກເວທີປຶກສາຫາລືຂອງຫຼາຍພາກສ່ວນກ່ຽວຂ້ອງ.
(ຈຳນວນ 1 ແຜນດຳເນີນງານ ທີ່ໄດ້ຮັບການເຫັນດີຮ່ວມກັນລະຫວ່າງສະຖາບັນ)

ຕົວຊີ້ວັດຜົນໄດ້ຮັບ 2.3:
ຈຳນວນມາດຕະການທີ່ໄດ້ຈັດຕັ້ງປະຕິບັດ ເຊິ່ງມີຄວາມເໝາະສົມກັບ ບົດບາດຍິງ-ຊາຍ ແລະ ເນັ້ນການມີສ່ວນຮ່ວມ, ພາຍໃຕ້ແຜນດຳເນີນງານເພື່ອສະກັດກັ້ນການຄ້າຂາຍສັດປ່າຜິດກົດໝາຍ ທີ່ໄດ້ຮັບການປະສານງານຮ່ວມກັນລະຫວ່າງສະຖາບັນ.
(ຈຳນວນ 2 ມາດຕະການ ທີ່ໄດ້ຮັບການປະສານງານຮ່ວມກັນລະຫວ່າງສະຖາບັນ)

ຜົນສຳເລັດອັນພົ້ນເດັ່ນ

- **ອຸທິຍານແຫ່ງຊາດ ຫີນໜາມໜໍ່ ໄດ້ຮັບການຂຶ້ນທະບຽນເປັນ ມໍຣະດົກໂລກທາງທຳມະຊາດ ໂດຍ UNESCO ໃນເດືອນກໍລະກົດ 2025**. ນີ້ຖືເປັນມໍລະດົກໂລກທາງທຳມະຊາດແຫ່ງທຳອິດຂອງ ສປປ ລາວ ແລະ ເປັນແຫຼ່ງມໍຣະດົກໂລກຮ່ວມແດນແຫ່ງທຳອິດໃນອາຊີຕາເວັນອອກສ່ຽງໃຕ້ (ເຊື່ອມຕໍ່ກັບອຸທິຍານແຫ່ງຊາດ ຟອງຫຍາ-ແກບັງ ຂອງຫວຽດນາມ).
- **ໄດ້ຈັດພິທີມອບ-ຮັບ ໃບຢັ້ງຢືນການເປັນມໍຣະດົກໂລກ** ຢ່າງເປັນທາງການໃຫ້ແກ່ພາກສ່ວນກ່ຽວຂ້ອງຂັ້ນແຂວງ ຢູ່ເມືອງທ່າແຂກ, ພ້ອມທັງໄດ້ເຜີຍແຜ່ ຄຸນຄ່າຄວາມເປັນເອກະລັກສະເພາະທີ່ໂດດເດ່ນຂອງໂລກຂອງຫີນໜາມໜໍ່ ໃຫ້ແກ່ອຳນາດການປົກຄອງທຸກຂັ້ນ ແລະ ຊຸມຊົນທ້ອງຖິ່ນ ໄດ້ຮັບຮູ້ຢ່າງກວ້າງຂວາງ.
- **ໄດ້ຮ່າງແຜນດຳເນີນງານຮ່ວມຊາຍແດນ** ກັບ ອຸທິຍານແຫ່ງຊາດ ຟອງຍາ-ແກບາງ ໂດຍການຈັດກອງປະຊຸມປຶກສາຫາລືຢູ່ ທ່າແຂກ (ລາວ) ແລະ ດົງເຫີຍ (ຫວຽດນາມ).
- **ໄດ້ສ້າງແຜນການຄຸ້ມຄອງຮ່ວມ ອຸທິຍານແຫ່ງຊາດ ຫີນໜາມໜໍ່** ສະບັບໃໝ່ ໄລຍະ 5 ປີ (2026–2030) ແລະ ຮ່າງແຜນດຳເນີນງານເພື່ອສະກັດກັ້ນ ແລະ ຕ້ານການຄ້າຂາຍສັດປ່າຜິດກົດໝາຍ ພາຍໃນ ສປປ ລາວ.







ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້

- ການຄ້າຂາຍສັດປ່າຜິດກົດໝາຍ ສົ່ງຜົນກະທົບຕໍ່ວຽກງານຂອງລັດໃນຫຼາຍຂັ້ນ, ນັບແຕ່ລະດັບສູນກາງ ລົງຮອດທ້ອງຖິ່ນ. **ດັ່ງນັ້ນ, ການປະສານງານຕ້ອງລະອຽດ ແລະ ໃກ້ຊິດ.**
- ຂະບວນການສະເໜີຊື່ເຂົ້າເປັນມໍຣະດົກໂລກ ຕ້ອງໃຊ້ເວລາດົນ, ເພາະມີການປະເມີນດ້ານເຕັກນິກທີ່ລະອຽດຫຼາຍຂັ້ນຕອນ ແລະ **ຕ້ອງໄດ້ປະສານງານຢ່າງໃກ້ຊິດກັບຄູ່ຮ່ວມງານຝ່າຍຫວຽດນາມ.**
- ຄວາມພະຍາຍາມສະເໜີຊື່ເຂົ້າເປັນມໍຣະດົກໂລກນັ້ນຖືວ່າກຸ້ມຄ່າທີ່ສຸດ! ເພາະສະຖານະ 'ມໍຣະດົກໂລກ' ແມ່ນສັນຍະລັກແຫ່ງຄວາມພາກພູມໃຈຂອງຊາດ, **ເຊິ່ງຈະຊ່ວຍສ້າງຈິດສຳນຶກໃນການອະນຸລັກຊີວະນາໆພັນ ແລະ ເປີດໂອກາດໃໝ່ໆ ໃນການພັດທະນາເສດຖະກິດຜ່ານການທ່ອງທ່ຽວ.**
- **ການປະສານງານຢ່າງໃກ້ຊິດ ແລະ ວ່ອງໄວລະຫວ່າງຄູ່ຮ່ວມງານ ລາວ ແລະ ຫວຽດນາມ** ແມ່ນປັດໄຈສຳຄັນໃນການຈັດກອງປະຊຸມປຶກສາຫາລືຕ່າງໆ. ນອກຈາກນີ້, ຕ້ອງກຳນົດໜ້າທີ່ຄວາມຮັບຜິດຊອບໃນການສື່ສານໃຫ້ຈະແຈ້ງຕັ້ງແຕ່ເລີ່ມຕົ້ນ.

ແນວທາງໃນຕໍ່ໜ້າ

- **ສະໜຸບແຜນດຳເນີນງານຮ່ວມຊາຍແດນ ລະຫວ່າງ ອຸທິຍານແຫ່ງຊາດ ຫີນໜາມໜໍ່ ແລະ ຟອງຍາ-ແກບາງ** (ຫວຽດນາມ) ເພື່ອອາງຮາກຖານໃຫ້ແກ່ການຮ່ວມມືຄຸ້ມຄອງແຫຼ່ງມໍຣະດົກໂລກຮ່ວມກັນ.
- **ສະໜຸບແຜນການຄຸ້ມຄອງຮ່ວມ ອຸທິຍານແຫ່ງຊາດ ຫີນໜາມໜໍ່ ໄລຍະ 5 ປີ ໃຫ້ສຳເລັດສົມບູນ.**
- ນຳໃຊ້ສະຖານະການເປັນມໍຣະດົກໂລກ ເພື່ອ**ຊຸກຍູ້ການພັດທະນາການທ່ອງທ່ຽວ, ການຊອກຫາແຫຼ່ງທຶນ ແລະ ການອະນຸລັກທຳມະຊາດ**.
- **ສືບຕໍ່ເຜີຍແຜ່ ແລະ ສ້າງຄວາມຮັບຮູ້**ກ່ຽວກັບ ຄຸນຄ່າໂດດເດ່ນເປັນສາກົນ ຂອງອຸທິຍານແຫ່ງຊາດ ຫີນໜາມໜໍ່ ໃຫ້ກວ້າງຂວາງ.
- **ຂະຫຍາຍເຂດປ່າຂອງຫີນໜາມໜໍ່** ເຂົ້າໃນເຂດປ່າສະຫງວນແຫ່ງຊາດ ຕາມຄຳແນະນຳຂອງຄະນະກຳມະການມໍຣະດົກໂລກ, ໂດຍຜ່ານຂະບວນການ ຂໍຄວາມເຫັນດີຈາກຊຸມຊົນ (FPIC) ຢ່າງຮອບດ້ານ.
- **ເຜີຍແຜ່ແຜນດຳເນີນງານ**ຕ້ານການຄ້າຂາຍສັດປ່າແບບຜິດກົດໝາຍ (IWT) ແລະ **ເລີ່ມຈັດຕັ້ງປະຕິບັດກິດຈະກຳທີ່ໄດ້ຄັດເລືອກ.**



ໂຄງການປົກປັກຮັກສາ ແລະ ນຳໃຊ້ ລະບົບນິເວດ ປ່າໄມ້ ແລະ ຊີວະນາໆພັນ ໃນ ສປປ ລາວ (ProFEB)

ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

ຮ່ວມໃຫ້ທຶນໂດຍ
ສະຫະພາບ ເອີຣົບ

ຈັດຕັ້ງປະຕິບັດໂດຍ
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

ການສຶກສາ

ຕົວຊີ້ວັດຜົນໄດ້ຮັບ 3.1

ທຶນການສຶກສາທີ່ສະໜອງໃຫ້ແກ່ນັກສຶກສາມະຫາວິທະຍາໄລນັ້ນ 50% ແມ່ນເພດຍິງ ທີ່ໄດ້ເຂົ້າຮຽນໃນຫຼັກສູດທີ່ກ່ຽວຂອງ ((ຕົວຢ່າງ: FLR, ການປູກຕົ້ນໄມ້ແບບຍືນຍົງ, ກະສິກຳ-ປ່າໄມ້, NTFP, ການປຸງແຕ່ງໄມ້,ການຄຸ້ມຄອງການອະນຸລັກ)

ຂໍ້ມູນເບື້ອງຕົ້ນ: ນັກສຶກສາທີ່ໄດ້ຮັບທຶນ 0 ຄົນ

ເປົ້າໝາຍ: ນັກສຶກສາທີ່ໄດ້ຮັບທຶນ 100 ຄົນ

ຕົວຊີ້ວັດຜົນໄດ້ຮັບ 3.2

ການຍົກລະດັບຫ້ອງທົດລອງໄມ້ຂອງ ມຊ ເພື່ອໃຫ້ການບໍລິການແກ່ພາກເອກະຊົນ ແລະ ຜູ້ຊົມໃຊ້ທົ່ວໄປ.

ຂໍ້ມູນເບື້ອງຕົ້ນ: ໃຫ້ການບໍລິການ 20 ຢ່າງ (12 ການບໍລິການແມ່ນສຳລັບທົດລອງຄຸນລັກສະນະຂອງໄມ້ ແລະ ຜະລິດຕະພັນໄມ້ ແລະ 8 ຫຼັກສູດໄລຍະສັ້ນ)

ເປົ້າໝາຍ: ໃຫ້ການບໍລິການ 30 ຢ່າງ (17 ການບໍລິການແມ່ນສຳລັບທົດລອງຄຸນລັກສະນະຂອງໄມ້ ແລະ ຜະລິດຕະພັນໄມ້ ແລະ 13 ຫຼັກສູດໄລຍະສັ້ນ) (3/2027)

ຜົນສຳເລັດອັນພົ້ນເດັ່ນ

ໂຄງການທຶນການສຶກສາຂະແໜງປ່າໄມ້:



ໂຄງການທຶນການສຶກສາ ປົກປັກຮັກສາ ແລະ ນຳໃຊ້ ລະບົບນິເວດປ່າໄມ້ ແລະ ຊີວະນາໆພັນແບບຍືນຍົງໄດ້ **ເປີດໂຕຂຶ້ນໃນສົກຮຽນ 2025/2026,** ໂດຍການຮ່ວມມືກັບຄະນະວິຊາປ່າໄມ້ 3 ແຫ່ງ ແລະ ບໍລິສັດປູກໄມ້ອຸດສາຫະກຳ 3 ແຫ່ງ ທີ່ໃຫຍ່ທີ່ສຸດໃນ ສປປລາວ. ໂດຍໄດ້ມອບ ທຶນການສຶກສາຈຳນວນ **100** ທຶນ ໃນ 3 ລະດັບປະລິນຍາ.



78,6 ເພດຍິງ — **14** ລະດັບປະລິນຍາຕີ

31,2 ເພດຍິງ — **77** ລະດັບປະລິນຍາໂທ

44,4 ເພດຍິງ — **9** ລະດັບປະລິນຍາເອກ

ມອບ-ຮັບ **ອຸປະກອນຮັບໃຊ້ການຮຽນ-ການສອນ ດ້ານໄອທີ (IT)** ທັງໝົດ ເຊັ່ນ: ຄອມພິວເຕີໂນດບຸກ, ຄອມພິວເຕີຕັ້ງໂຕະ, ຫ້ອງທົດລອງລະບົບຂໍ້ມູນຂ່າວສານພູມສາດ (GIS) ແລະ ການສຳຫຼວດໄລຍະໄກ (RS), ເຄື່ອງສາຍ (Projector), ເຄື່ອງພິມ ແລະ ໝຶກພິມ.

78 ລາຍການ





ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້

- ການດຶງດູດນັກສຶກສາ ແລະ ຄວາມໜ້າສົນໃຈຂອງຫຼັກສູດຍັງຕ່ຳ, ຈຶ່ງຈຳເປັນ **ຕ້ອງໄດ້ປັບປຸງຈຸດຢືນ ແລະ ເນື້ອໃນຫຼັກສູດ**ໃຫ້ແທດເໝາະກັບຄວາມຕ້ອງການ ເພື່ອເພີ່ມຈຳນວນນັກສຶກສາໃໝ່.
- **ພະນັກງານບາງສ່ວນຍັງມີຂໍ້ຈຳກັດດ້ານພາສາອັງກິດ**, ເຊິ່ງເປັນອຸປະສັກຕໍ່ການພົວພັນ ແລະ ສ້າງຄວາມຮ່ວມມືກັບສາກົນ.
- ຂັ້ນຕອນການເຮັດວຽກທີ່ບໍ່ສອດຄ່ອງກັນ ລະຫວ່າງຜູ້ໃຫ້ທຶນ ແລະ ມະຫາວິທະຍາໄລ ເຮັດໃຫ້ວຽກງານຊັກຊ້າ. ດັ່ງນັ້ນ, **ຈຶ່ງຕ້ອງໄດ້ປັບປຸງການປະສານງານດ້ານລະບຽບການໃຫ້ດີຂຶ້ນກວ່າເກົ່າ.**
- **ຄະນະວິທະຍາສາດປ່າໄມ້ ຍັງບໍ່ທັນມີຈຸດຢືນທີ່ໂດດເດັ່ນໃນລະດັບຊາດ ແລະ ພາກພື້ນ**, ເຮັດໃຫ້ສັງຄົມຮັບຮູ້ໜ້ອຍ ແລະ ສ້າງຜົນກະທົບຕໍ່ວົງການສຶກສາໄດ້ບໍ່ເຕັມທີ່.
- **ການປະສານງານລະຫວ່າງຄະນະ** ແລະ ພາກວິຊາຍັງມີຊ່ອງຫວ່າງ **ຍ້ອນການປ່ຽນແປງຂອງໂຄງຮ່າງການຈັດຕັ້ງ** ເຮັດໃຫ້ການເຮັດວຽກຕົວຈິງຍັງບໍ່ທັນຄ່ອງຕົວ.
- **ການສື່ສານກັບ GIZ-ProFEB ກ່ຽວກັບໜ້າທີ່ ແລະ ຂັ້ນຕອນຕ່າງໆ ຍັງມີລັກສະນະສະເພາະກິດ (ບໍ່ເປັນລະບົບ)**, ເຮັດໃຫ້ວຽກງານບໍ່ຊັດເຈນ. ຈຶ່ງຈຳເປັນຕ້ອງມີການສື່ສານພາຍໃນທີ່ຕັ້ງໜ້າ, ເປັນລະບົບ ແລະ ສ້າງຄວາມເປັນເອກະພາບພາຍໃນຄະນະໃຫ້ເຂັ້ມແຂງຂຶ້ນ.

ແນວທາງໃນຕໍ່ໜ້າ



ສ້າງວິໄສທັດຮ່ວມກັນ ເພື່ອເປັນທິດທາງໃຫ້ແກ່ການພັດທະນາພາກວິຊາ ແລະ ການພົວພັນຮ່ວມມືກັບພາຍນອກ.



ສ້າງຄວາມເຂັ້ມແຂງພາຍໃນຄະນະ **ໂດຍການເຮັດໃຫ້ທຸກພາກວິຊາມີເປົ້າໝາຍດຽວກັນ** ເພື່ອສ້າງຈຸດຢືນ ແລະ ເຮັດໃຫ້ສັງຄົມຮັບຮູ້ບົດບາດຂອງຄະນະໄດ້ຫຼາຍຂຶ້ນ.



ຮັດແໜ້ນການພົວພັນກັບສາກົນ ໂດຍຜ່ານການປະສານງານທີ່ຕັ້ງໜ້າ ເພື່ອເຮັດໃຫ້ຜົນງານການວິໄຈທີ່ດີເດັ່ນຂອງແຕ່ລະບຸກຄົນ ກາຍເປັນຜົນສຳເລັດລວມ ແລະ ເພີ່ມບົດບາດຂອງຄະນະວິຊາໃຫ້ສູງຂຶ້ນ.

ໂຄງການປົກປັກຮັກສາ ແລະ ນຳໃຊ້ ລະບົບນິເວດ ປ່າໄມ້ ແລະ ຊີວະນາໆພັນ ໃນ ສປປ ລາວ (ProFEB)

ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

ຮ່ວມໃຫ້ທຶນໂດຍ
ສະຫະພາບ ເອີຣົບ

ຈັດຕັ້ງປະຕິບັດໂດຍ
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

ການຟື້ນຟູພູມີທັດປ່າໄມ້

ຕົວຊີ້ວັດຜົນໄດ້ຮັບ 4.1
ໄດ້ມີບັນດາການລິເລີ່ມ ໃນການຮ່ວມມື ລະຫ່ວາງ ລັດຖະບານ, ສະຖາບັນຄົ້ນຄວ້າ, ບໍລິສັດ ແລະ ປະຊາຊົນ ໃນການອະນຸລັກຊີວະນາໆພັນ ແລະ ເພີ່ມທະວີ ການເຊື່ອມຕໍ່ຂອງລະບົບນິເວດ ໃນລະດັບພູມີທັດ (ໃນທຸກປະເພດ ທີ່ດິນ).
ຂໍ້ມູນພື້ນຖານ: 0
ຄາດໝາຍ: 5 ການຮ່ວມມື

ຜົນໄດ້ຮັບ ຕົວຊີ້ວັດ 4.2
ຈຳນວນປ່າໄມ້ຊຸມຊົນ ທີ່ໄດ້ກຳນົດ ກົດຈະກຳການຟື້ນຟູປ່າໄມ້ ທີ່ເຊື່ອມໂຍງກັບ ບັນດາຕະຫຼາດ ລວມທັງ ລະບົບການສົ່ງເສີມການປູກໄມ້ໃຫ້ປະຊາຊົນ.
ຂໍ້ມູນພື້ນຖານ: 0 ປ່າໄມ້ ທີ່ຄຸ້ມຄອງໂດຍຊຸມຊົນ
ຄາດໝາຍ: 30 ປ່າໄມ້ ທີ່ຄຸ້ມຄອງໂດຍຊຸມຊົນ

ຜົນໄດ້ຮັບ ຕົວຊີ້ວັດ 4.3
ຈຳນວນປະຊາຊົນ (ແມ່ຍິງ %) ຢືນຢັນວ່າ ເຂົາເຈົ້າ ໄດ້ຮັບຜົນປະໂຫຍດຈາກ ການຟື້ນຟູພູມີທັດປ່າໄມ້ (FLR)
ຂໍ້ມູນພື້ນຖານ: 0 ຜູ້ເຂົ້າຮ່ວມ
ຄາດໝາຍ: 300 ຜູ້ເຂົ້າຮ່ວມ (ໃນນັ້ນ, 30% ແມ່ນ ແມ່ຍິງ)

ຜົນສຳເລັດອັນພົ້ນເດ່ັນ

- **ໄດ້ປຶກສາຫາລືທ່ວ 31 ບ້ານເປົ້າໝາຍ ແລະ ຄັດເລືອກກຸ່ມບ້ານໄດ້ສຳເລັດໃນ 4 ແຂວງເປົ້າໝາຍ** (ອຸດົມໄຊ, ຫົວພັນ, ຫຼວງພະບາງ, ແລະ ໄຊຍະບູລີ), ລວມມີ 7 ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ(ກສມ).
- **ສຳເລັດການສ້າງແຜນກົດຈະກຳ ການຟື້ນຟູພູມີທັດປ່າໄມ້ (FLR) ໃນທຸກປະເພດປ່າ** ເພື່ອທົດລອງ ຈັດຕັ້ງປະຕິບັດຢູ່ 1 ບ້ານເປົ້າໝາຍ ຂອງ 7 ເມືອງ (ສີບເບົາ, ວຽງໄຊ, ຊຽງເງິນ, ນານ, ຫົງສາ, ໄຊຍະບູລີ ແລະ ເມືອງໄຊ).
- **ຈັດຝຶກອົບຮົມ FLR ແລະ ໂຄຣມ** ໄດ້ຈັດຂຶ້ນຢູ່ ມະຫາວິທະຍາໄລ ຊຽງໃຫມ່ (ປະເທດໄທ) ໃນເດືອນມັງກອນ, ປີ 2026 ແລະ ການຝຶກອົບຮົມ FLR ໃນ 4 ແຂວງເປົ້າຫມາຍ ໃນເດືອນກຸມພາ 2026.
- **ເຊັນບົດບັນທຶກຄວາມເຂົ້າໃຈ (MoU) ຮ່ວມກັບ ບໍລິສັດ ນ້ຳດື່ມ ມິນິໂຣ (Minero)** ຢູ່ແຂວງຫຼວງພະບາງ ກ່ຽວກັບການຮ່ວມມືດ້ານການລົງທຶນໃນວຽກງານ ການຟື້ນຟູພູມີທັດປ່າໄມ້ (FLR), ພ້ອມທັງກຳນົດຄວາມຕ້ອງການ ແລະ ໂອກາດໃນການລົງທຶນ ໃນເດືອນມີນາ 2026.
- ຊຸກຍູ້ການຮ່ວມມືລະຫວ່າງ ຫຼາຍໜ່ວຍງານລັດ ແລະ ຜູ້ໃຫ້ທຶນ **ເພື່ອສ້າງລະບົບການຊຳລະຄ່າບໍລິການທາງດ້ານນິເວດ ວິທະຍາປ່າໄມ້ (PFES) ແຫ່ງຊາດ** ເພື່ອເປັນກົນໄກການເງິນທີ່ຍືນຍົງ, ປັດຈຸບັນ ຮ່າງ ບົດແມ່ນສຳເລັດສົມບູນແລ້ວ.









ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້

- ຄວາມສາມາດໃນການປະເມີນສະພາບການເຊື່ອມໂຊມຂອງປ່າໄມ້ ແລະ ເຕັກນິກການຟື້ນຟູພູມີທັດປ່າໄມ້ (FLR) ຍັງມີຈຳກັດ, **ເຮັດໃຫ້ການກຳນົດ ແລະ ການຈັດລຽງບຸລິມະສິດຂອງ ກົດຈະກຳຟື້ນຟູປ່າໄມ້ຍັງບໍ່ທັນໄດ້ດີເທົ່າທີ່ຄວນ.**
- ບັນດາກົດຈະກຳການຟື້ນຟູສ່ວນໃຫຍ່ແມ່ນຍັງ**ຂຶ້ນກັບລະດູການ**
- **ຕ້ອງໄດ້ເພີ່ມທະວີຄວາມຮ່ວມມື ແລະ ການປະສານງານຢ່າງໃກ້ຊິດ ລະຫວ່າງ** ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ບ້ານ ໃນວຽກງານການບັງຄັບໃຊ້ກົດໝາຍ, ໂດຍ ສະເພາະແມ່ນບັນຫາຜົນກະທົບຈາກສັດລ້ຽງ, ໄຟໄໝ້ລາມປ່າ ແລະ ການບຸກລຸກພື້ນທີ່ປ່າໄມ້.
- **ການມີສ່ວນຮ່ວມຂອງພາກເອກະຊົນແມ່ນຍັງຈຳກັດ** ແລະ ຕ້ອງໄດ້ຮັບການຊຸກຍູ້ໃຫ້ເຂັ້ມແຂງຂຶ້ນຕື່ມອີກ.
- **ການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ ແລະ ການວາງແຜນຄຸ້ມຄອງປ່າໄມ້ບ້ານ** ແມ່ນບາດກ້າວສຳຄັນສຳລັບການມີສ່ວນຮ່ວມຂອງ FLR
- **ການເຊື່ອມໂຍງກົດຈະກຳການຟື້ນຟູປ່າໄມ້ ກັບ ຜົນປະໂຫຍດໃນການດຳລົງຊີວິດຂອງຊາວ ບ້ານ** ຊ່ວຍເພີ່ມທະວີການເຂົ້າຮ່ວມຂອງຊຸມຊົນ, ຄວາມເປັນເຈົ້າການ ແລະ ຄວາມມຸ່ງໝັ້ນໃນການສືບຕໍ່ ປະຕິບັດກົດຈະກຳໃນໄລຍະຍາວ.
- **ການວາງແຜນເກັບແກ່ນພັນພືດຢ່າງເໝາະສົມ ແລະ ການມີສ່ວນຮ່ວມຂອງຊຸມຊົນໃນ ເບື້ອງຕົ້ນ** ແມ່ນມີສ່ວນຊ່ວຍໃນການປັບປຸງຄຸນນະພາບຂອງເບ ຍ ແລະ ອັດຕາຄວາມສຳເລັດໃນການຟື້ນ ຟູປ່າໄມ້ໃຫ້ດີຂຶ້ນ.
- **ການຝຶກອົບຮົມດ້ານເຕັກນິກ ແລະ ວິຊາການຢ່າງຕໍ່ເນື່ອງ** ໃຫ້ແກ່ພະນັກງານຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ຄົນໃນຊຸມຊົນ ແມ່ນມີຄວາມຈຳເປັນໃນການເສີມສ້າງຂີດຄວາມ ສາມາດ ແລະ ປັບປຸງການນຳໃຊ້ເຕັກນິກເຂົ້າໃນການຟື້ນຟູປ່າ.
- **ການມີສ່ວນຮ່ວມຂອງພາກເອກະຊົນ** ແມ່ນມີຄວາມຈຳເປັນສຳລັບຄວາມພະຍາຍາມໃນການຟື້ນຟູ ປ່າໃນພາກສ່ວນທີ່ໃຫຍ່ຂຶ້ນ.

ແນວທາງໃນຕໍ່ໜ້າ

ການຈັດຕັ້ງປະຕິບັດແຜນຂັ້ນບ້ານ

- **ສືບຕໍ່ຈັດຕັ້ງປະຕິບັດແຜນກົດຈະກຳ ການຟື້ນຟູພູມີທັດປ່າໄມ້ (FLR)** ໃນທຸກບ້ານ ເປົ້າໝາຍ, ໂດຍເນັ້ນການປະສານສົມທົບລະຫວ່າງ ການຟື້ນຟູຕົວຈິງ, ການຝຶກອົບຮົມຜ່ານ ການລົງມືເຮັດ ແລະ ການຮ່ວມມືທາງດ້ານວິຊາການ.
- **ຈັດຝຶກອົບຮົມການບໍລິຫານຈັດການເຮືອນເບ ຍໄມ້** ໃຫ້ແກ່ທັງໝົດ 31 ບ້ານ ເປົ້າໝາຍ ໂດຍຜ່ານພະນັກງານຂອງ ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເພື່ອ ສ້າງຂີດຄວາມສາມາດດ້ານເຕັກນິກໃຫ້ແກ່ທ້ອງຖິ່ນ.
- **ສ້າງຕັ້ງກົນໄກການເຂົ້າເຖິງແຫຼ່ງທຶນ** ໂດຍຜ່ານກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ສຳລັບກົດຈະກຳ ການຟື້ນຟູພູມີທັດປ່າໄມ້ ໃນຂັ້ນແຂວງ, ເມືອງ ແລະ ບ້ານ.

ການຈ່າຍຄ່າບໍລິການດ້ານລະບົບນິເວດ ແລະ ປ່າໄມ້ (PFES)



MOU ລະຫວ່າງ VFPF ແລະ VNFF ກ່ຽວກັບການຄຸ້ມຄອງທຶນ ແລະ ການສຶກສາການ ປະຕິບັດໃນຕໍ່ໜ້າຂອງການຈ່າຍຄ່າບໍລິການດ້ານລະບົບນິເວດ ແລະ ປ່າໄມ້ (PFES)

ການເສີມສ້າງການຮ່ວມມືກັບພາກເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ

- ປະສານສົມທົບກັບ **ສະມາຄົມເພື່ອນຜາຕາດແກ້ (FPTK) ແລະ ມະຫາວິທະຍາໄລສຸພານຸວົງ** ເພື່ອຊຸກຍູ້ການຮ່ວມມື ກັບ ບໍລິສັດນ້ຳດື່ມ ມິນິໂຣ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ການມີສ່ວນຮ່ວມ ຂອງຊຸມຊົນທ້ອງຖິ່ນໃນແຂວງຫຼວງພະບາງ.
- **ສືບຕໍ່ສະໜັບສະໜູນການພັດທະນາການທ່ອງທ່ຽວແບບອະນຸລັກຢູ່ແຂວງອຸດົມໄຊ** ໂດຍ ຜ່ານ ສະມາຄົມຊ່ວຍເຫຼືອຊຶ່ງກັນ ແລະ ກັນ (AMA) ພາຍໃຕ້ການຮ່ວມມືກັບ ໂຄງການນ້ຳກັດຢ໌ລະປາ.
- **ເພີ່ມທະວີການເປັນຄູ່ຮ່ວມງານກັບ ບໍລິສັດ ໄຊຈະເລີນ ຈຳກັດ** ໂດຍຜ່ານການສະໜັບສະໜູນ ຂອງສະມາຄົມພັດທະນາໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ (BNDA) ເພື່ອສົ່ງເສີມການນຳໃຊ້ໃບໄມ້ປ່ອງ ຢ່າງຍືນຍົງ ຄວບຄູ່ໄປກັບການຊຸກຍູ້ວຽກງານການຟື້ນຟູປ່າໄມ້ຢູ່ແຂວງຫົວພັນ.
- ເຊື່ອມໂຍງການປຶກສາຫາລືດ້ານນະໂຍບາຍ ການຈ່າຍຄ່າບໍລິການທາງດ້ານນິເວດວິທະຍາປ່າໄມ້ (PFES) ແລະ ການສ້າງແຜນແມ່ບົດການຟື້ນຟູປ່າໄມ້ ເຂົ້າກັບການມີສ່ວນຮ່ວມຂອງພາກເອກະຊົນ.



ການສຶກສາຄວາມເປັນໄປໄດ້ ແລະ ຮ່າງດຳລັດວ່າດ້ວຍ**ການຈ່າຍ ຄ່າບໍລິການດ້ານລະບົບນິເວດ ແລະ ປ່າໄມ້ PFES** ໄດ້ສຳເລັດ

ໂຄງການປົກປັກຮັກສາ ແລະ ນຳໃຊ້ ລະບົບນິເວດ ປ່າໄມ້ ແລະ ຊີວະນາໆພັນ ໃນ ສປປ ລາວ (ProFEB)

ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

ຮ່ວມໃຫ້ທຶນໂດຍ
ສະຫະພາບ ເອີຣົບ

ຈັດຕັ້ງປະຕິບັດໂດຍ
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

ຕ່ອງໂສ້ມູນຄ່າເພີ່ມ

ຕົວຊີ້ວັດທີ 5.1
ຈຳນວນຜູ້ຜະລິດ ທີ່ມີສ່ວນຮ່ວມຮ່ວມໃນຕົວແບບການຜະລິດ ຜະລິດຕະພັນຈາກປ່າໄມ້ ເຂົ້າຮ່ວມໃນບັນດາກິດຈະກຳເພື່ອປັບປຸງການເຂົ້າເຖິງຕະຫຼາດ
ຂໍ້ມູນພື້ນຖານ: 0 ຜູ້ຜະລິດ (ຜ່ານມາ ໂຄງການຍັງບໍ່ທັນມີການຊ່ວຍເຫຼືອດ້ານຕ່ອງໂສ້ມູນຄ່າເຄື່ອງປ່າຂອງດົງເທື່ອ)
ເປົ້າໝາຍ: 500 ຜູ້ຜະລິດ, ໃນນັ້ນ 30% ແມ່ນແມ່ຍິງ (ພາຍໃນເດືອນ 12/2026)

ຕົວຊີ້ວັດທີ 5.2
ຈຳນວນຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSME) ທີ່ມີແຜນທຸລະກິດສຳລັບການຜະລິດແບບຍືນຍົງ ແລະ ສອດຄ່ອງກັບມາດຕະຖານຄວາມຍືນຍົງ.
ຂໍ້ມູນພື້ນຖານ: 0 ວິສາຫະກິດ (ຜ່ານມາຍັງບໍ່ທັນມີການໃຫ້ຄຳປຶກສາດ້ານແຜນທຸລະກິດ ແລະ ການເງິນ ເພື່ອເພີ່ມສະມັດຖະພາບການຜະລິດ)
ເປົ້າໝາຍ: 20 ວິສາຫະກິດ (ພາຍໃນເດືອນ 12/2026)

ຕົວຊີ້ວັດທີ 5.3
ຈຳນວນຄູ່ຮ່ວມມືທາງທຸລະກິດລາຍໃໝ່ ລະຫວ່າງຜູ້ຜະລິດຂະໜາດນ້ອຍ, ວິສາຫະກິດ MSME ແລະ ບໍລິສັດຂະໜາດໃຫຍ່ ສຳລັບຕ່ອງໂສ້ການສະໜອງທີ່ຍືນຍົງ, ລວມທັງຮູບແບບການຜະລິດແບບພັນທະສັນຍາ (Out grower schemes).
ຂໍ້ມູນພື້ນຖານ: 0 ຄູ່ຮ່ວມມື (ຍັງຢູ່ໃນຂັ້ນຕອນການຄັດເລືອກພື້ນທີ່ເປົ້າໝາຍທີ່ຈະໃຫ້ຄູ່ຮ່ວມງານໃຫ້ການສະໜັບສະໜູນ)
ເປົ້າໝາຍ: 4 ຄູ່ຮ່ວມງານ (ພາຍໃນເດືອນ 12/2026)


ຜົນສຳເລັດອັນພົ້ນເດັ່ນ

- ຈັດກອງປະຊຸມປຶກສາຫາລື ກ່ຽວກັບ**ການວາງແຜນດຳເນີນງານ** ຢູ່ 6 ແຂວງເປົ້າໝາຍ (ເດືອນເມສາ - ພຶດສະພາ 2025)
- **ຈັດຝຶກອົບຮົມກ່ຽວກັບການສົ່ງອອກນ້ຳເຜິ້ງໄປຍັງ ສະຫະພາບເອີຣົບ (EU)** ໃຫ້ແກ່ຕົວແທນພາກລັດ ແລະ ກຸ່ມຜູ້ຜະລິດ (ເດືອນພະຈິກ 2025).
- **ປະເມີນຄວາມຕ້ອງການ ແລະ ທ່າແຮງຂອງຊາປ່າ** ຢູ່ແຂວງອຸດົມໄຊ (ເດືອນພະຈິກ 2025 - ມີນາ 2026).
- **ປະເມີນທ່າແຮງຂອງກຸ່ມຜູ້ຜະລິດ** ເພື່ອຈັດທະບຽນເປັນກຸ່ມຈັດຕັ້ງຢ່າງເປັນທາງການ ໃນ 6 ແຂວງເປົ້າໝາຍ (ເດືອນພະຈິກ 2025 - ປັດຈຸບັນ).
- ລົງເຄື່ອນໄຫວພາກສະໜາມ **ເພື່ອເກັບກຳຂໍ້ມູນຫ່ວງໂສ້ມູນຄ່າ ແລະ ຄັດເລືອກບ້ານເປົ້າໝາຍ** ໃນ 6 ແຂວງທົ່ວປະເທດ (ເດືອນມີນາ 2025 - ປັດຈຸບັນ).
- **ທັດສະນະສຶກສາ ແລະ ເຂົ້າຮ່ວມງານວາງສະແດງເຟີນີເຈີ imm ແລະ ຢ້ຽມຢາມໂຮງງານເຟີນີເຈີ** ທີ່ເມືອງ ໂຄໂລນ, ປະເທດເຢຍລະມັນ ໂດຍມີຄະນະຜູ້ແທນ 10 ທ່ານ (ຈາກ ວິສາຫະກິດ ປຸງແຕ່ງໄມ້ ແລະ ເຟີນີເຈີ ຂະໜາດນ້ອຍ ແລະ ຂະໜາດກາງ, ສະມາຄົມເຟີນີເຈີລາວ, ແລະ ພາກລັດ (ກົມປ່າໄມ້ ແລະ ກົມສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ) (ເດືອນ ມັງກອນ2026)
- **ກິດຈະກຳແຂ່ງຂັນນະວັດຕະກຳ (Innovation Challenge):** ໄດ້ຮັບໃບສະໝັກ 50 ສະບັບ ແລະ ຄັດເລືອກໄດ້ 14 ໂຄງການທີ່ຊະນະເລີດ ເຊິ່ງໄດ້ຮັບທຶນສະໜັບສະໜູນທັງໝົດ 170,000 ໂດລາສະຫະລັດ. ການຈັດຕັ້ງປະຕິບັດໂຄງການແມ່ນມີກຳນົດ 6 ເດືອນ ໂດຍເລີ່ມແຕ່ເດືອນເມສາ2026 ເປັນຕົ້ນໄປ (ເດືອນ 11, 2025 - ເດືອນ 3/2026)









ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້

ການພັດທະນາຕະຫຼາດ ແລະ ການສ້າງຄວາມເຂັ້ມແຂງໃຫ້ຫ່ວງໂສ້ມູນຄ່າ ເຄື່ອງປ່າຂອງດົງ (NTFP)

- ການປັບປຸງກົງຈັກການຈັດຕັ້ງຂອງພາກລັດເຮັດໃຫ້ການປະສານງານຕິດຂັດ. **ຈຳເປັນຕ້ອງມີການເຮັດເອກະສານ ມອບ-ຮັບວຽກທີ່ຊັດເຈນ ແລະ ສືບຕໍ່ສ້າງສາຍພົວພັນ**ກັບຜູ້ຮັບຜິດຊອບວຽກງານໃໝ່ຢ່າງຕໍ່ເນື່ອງ.
- ສະພາບການໃນທ້ອງຖິ່ນປ່ຽນແປງໄວ, **ຈຶ່ງຕ້ອງໄດ້ອັບເດດຂໍ້ມູນໃຫ້ທັນສະໄໝຢູ່ສະເໝີ ແລະ ນຳໃຊ້ ວິທີການທີ່ຢືດຢຸ່ນ** ເພື່ອຮັບມືກັບການປ່ຽນແປງຂອງຮູບແບບການນຳໃຊ້ທີ່ດິນ, ການດຳລົງຊີວິດຂອງປະຊາຊົນ ແລະ ການຍົກຍ້າຍຖິ່ນຖານຂອງຊາວໜຸ່ມ.
- **ຈັດຕັ້ງກຸ່ມການຜະລິດທີ່ຍັງກະແຈກກະຈາຍໃຫ້ເປັນລະບົບ** ໂດຍການສ້າງກົນໄກການຄຸ້ມຄອງ ແລະ ຄວາມເຊື່ອໝັ້ນລະຫວ່າງກັນ.
- **ວາງແຜນການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບລະດູການ** ເພື່ອໃຫ້ເກີດປະສິດທິຜົນສູງສຸດ.
- ຕ້ອງໂສ້ມູນຄ່າຜະລິດຕະພັນປ່າໄມ້ **ຕ້ອງການການສະໜັບສະໜູນທີ່ຖືກຈຸດ** ໃນດ້ານການວາງແຜນ, ການເຮັດບັນຊີ ແລະ ການເຂົ້າເຖິງຕະຫຼາດ.

Innovation Challenge

- ການຊອກຫາຜູ້ເຂົ້າຮ່ວມທີ່ກົງກັບກຸ່ມເປົ້າໝາຍ **ຈຳເປັນຕ້ອງມີການລົງເຄື່ອນໄຫວຊອກຫາ ແລະ ຄັດເລືອກຢ່າງໃກ້ຊິດ.**
- **ຄວນປັບຮູບແບບການຊ່ວຍເຫຼືອ**ໃຫ້ເໝາະສົມກັບລະດັບປະສົບການ ແລະ ຄວາມພ້ອມຂອງແຕ່ລະໂຄງການ.
- **ຍັງພົບເຫັນບັນຫາໃນການວາງແຜນງົບປະມານ**, ເຊິ່ງຜູ້ສະໝັກຍັງຕ້ອງການຄຳແນະນຳ ແລະ ການຊ່ວຍເຫຼືອດ້ານນີ້ຕື່ມອີກ.
- **ຕ້ອງແຈ້ງໃຫ້ຊັດເຈນວ່າລາຍຈ່າຍປະເພດໃດ**ທີ່ສາມາດເບີກຈ່າຍໄດ້ ເພື່ອໃຫ້ຜູ້ສະໝັກມີຄວາມເຂົ້າໃຈທີ່ຖືກຕ້ອງແຕ່ເລີ່ມຕົ້ນ.
- **ການໃຫ້ຄຳປຶກສາ ຊ່ວຍຍົກລະດັບຄຸນນະພາບຂອງການນຳສະເໜີແຜນງານໄດ້ຢ່າງດີ**, ເຊິ່ງເປັນບົດຮຽນສຳຄັນທີ່ຄວນນຳໃຊ້ໃນໂຄງການຕໍ່ໜ້າ.

Study Trip to Germany

- **ແຮງງານຍັງຂາດໂອກາດໃນການຝຶກອົບຮົມຕົວຈິງ ແລະ ຂາດຄວາມຮູ້ດ້ານຄວາມປອດໄພ.** ດັ່ງນັ້ນ, ຈຶ່ງຈຳເປັນຕ້ອງມີ ຫຼັກສູດຝຶກອົບຮົມໄລຍະສັ້ນແບບເນັ້ນການປະຕິບັດຕົວຈິງ ເພື່ອຍົກລະດັບສີມື ແລະ ຂີດຄວາມສາມາດຂອງແຮງງານໃຫ້ເຂັ້ມແຂງ.
- **ຍັງມີຄວາມເຂົ້າໃຈຈຳກັດກ່ຽວກັບການຢັ້ງຢືນ ແລະ ຂັ້ນຕອນການສົ່ງອອກ**, ຄວນມີການແນະນຳດ້ານມາດຕະຖານ ແລະ ການກຽມຄວາມພ້ອມດ້ານຕະຫຼາດ ທີ່ຊັດເຈນ ເພື່ອຊ່ວຍໃຫ້ຜະລິດຕະພັນສາມາດສົ່ງອອກໄປຕ່າງປະເທດໄດ້.
- **ການຂາດແຫຼ່ງທຶນໃນການຍົກລະດັບເຄື່ອງຈັກ ແລະ ລະບົບຄວາມປອດໄພ** ເຮັດໃຫ້ວິສາຫະກິດ (SME) ພັດທະນາໄດ້ຊ້າ. ນີ້ສະແດງໃຫ້ເຫັນເຖິງຄວາມຕ້ອງການ ການສະໜັບສະໜູນດ້ານການເງິນ ແລະ ການເປີດໂອກາດໃຫ້ເຂົາເຈົ້າໄດ້ເຂົ້າເຖິງນະວັດຕະກຳໃໝ່ໆ.

ແນວທາງໃນຕໍ່ໜ້າ

- **ຈັດກອງປະຊຸມວາງແຜນດຳເນີນງານ ຢູ່ 6 ແຂວງເປົ້າໝາຍ** (ເດືອນເມສາ - ມິຖຸນາ 2026).
- ເກັບກຳຂໍ້ມູນພື້ນຖານ ກ່ຽວກັບການປຸງແຕ່ງໄມ້ຢາງພາລາ (ເດືອນພຶດສະພາ 2026 - ເມສາ 2027).
- **ສະຫຼຸບການຈົດທະບຽນກຸ່ມຜູ້ຜະລິດໃຫ້ສຳເລັດ** (ພາຍໃນເດືອນຕຸລາ 2026).
- ລົງເຄື່ອນໄຫວພາກສະໜາມໃນ 6 ແຂວງເປົ້າໝາຍ ແລະ ເລີ່ມຈັດຕັ້ງປະຕິບັດກິດຈະກຳ**ສົ່ງເສີມກຸ່ມຜູ້ຜະລິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs).**
- **ສົ່ງເສີມການສ້າງຄູ່ຮ່ວມງານທາງທຸລະກິດ** ລະຫວ່າງ ກຸ່ມຜູ້ຜະລິດ, ວິສາຫະກິດ (MSMEs) ແລະ ຜູ້ຊື້ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການຕະຫຼາດ.
- **ຈັດຕັ້ງປະຕິບັດ 14 ໂຄງການທີ່ຊະນະເລີດຈາກ Innovation Challenge**, ພ້ອມທັງປະເມີນຜົນ ແລະ ຊອກຫາຊ່ອງທາງໃນການຂະຫຍາຍຜົນຂອງໂຄງການ (ເດືອນເມສາ - ຕຸລາ 2026).
- **ສືບຕໍ່ສະໜັບສະໜູນພາກທຸລະກິດ**ໃນການເຂົ້າເຖິງຕະຫຼາດ ແລະ ການນຳໃຊ້ເຕັກໂນໂລຊີ/ນະວັດຕະກຳໃໝ່ໆ ເຊັ່ນ: ການຈັດງານວາງສະແດງເຄື່ອງປ່າຂອງດົງ (NTFP) ໂດຍສະພາການຄ້າ ແລະ ອຸດສາຫະກຳ ແຂວງອຸດົມໄຊ ແລະ ການໄປທັດສະນະສຶກສາຢ່ງານວາງສະແດງ ANUGA ທີ່ບາງກອກ.
- **ຈັດຕັ້ງປະຕິບັດແຜນພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ (MSME) 5 ປີ** ຂອງກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (DOSMEP), ກະຊວງອຸດສາຫະກຳ ແລະ ການຄ້າ.

ໂຄງການ Green CUP

ໂຄງການສ້າງຄວາມເຂັ້ມແຂງເສດຖະກິດສີຂຽວ ແລະ ການປັບຕົວຕໍ່ການປ່ຽນແປງດິນຟ້າອາກາດດ້ານກະສິກຳ

ຜົນສຳເລັດທີ່ສຳຄັນ ໃນປີ 2025

Supported by:

ການຄຸ້ມຄອງ ແລະ ການພັດທະນາຂະແໜງ

GREEN CUP

ກາເຟ:

- *ສຳເລັດການປະເມີນຂະແໜງກາເຟ ແລະ ກຳລັງວາງແຜນຍຸດທະສາດ 2026 - 2030* ➲ ເອກະສານເຫຼົ່ານີ້ຈະຖືກນຳສະເໜີໃນກອງປະຊຸມ ຄສກ (CNCL) ທີ່ຈະມາເຖິງນີ້.
- *ສຳເລັດຂະບວນການປຶກສາຫາລື ສຳລັບການເຂົ້າເປັນສະມາຊິກຂອງ ສປປ ລາວ ໃນອົງການກາເຟສາກົນ (ICO)* ➲ *ຈະກະກຽມປະກອບເອກະສານສະໝັກ ແລະ ແຜນວຽກໃນປີ 2026*

ຊາ:

- *ສຳເລັດການສ້າງແຜນແມ່ບົດຊາແຫ່ງຊາດ, ໂດຍການຮ່ວມມືກັບ ອົງການອາຫານ ແລະ ການກະເສດ ແຫ່ງສະຫະປະຊາຊາດ (FAO) ແລະ ກົມປູກຝັງ (DOA) ກະຊວງກະສິກຳ ແລະ ສິ່ງແວດລ້ອມ (MAE)*
- *ການຈັດກອງປະຊຸມເຄືອຂ່າຍຊາ ຄັ້ງທີ 3 (ມີຜູ້ເຂົ້າຮ່ວມຫຼາຍກວ່າ 128 ທ່ານ) ຈາກລະດັບຊາດ ແລະ ລະດັບພາກພື້*








ການພັດທະນາຕ່ອງໂສ້ມູນຄ່າ

- **ເນື້ອທີ່ການຜະລິດ: ສູງກວ່າຕົວຊີ້ວັດທີ່ກຳນົດໄວ້**



- **ປະລິມານການຜະລິດປະຈຳປີ (ຄາດຄະເນ):**
  - **ກາເຟ:** ກາເຟໝາກແດງປະມານ 800 ໂຕນ ພາຍໃນປີ 2028, (ກາເຟໝາກຊ້ອນ 120 ໂຕນ)
  - **ຊາ: ໃບຊາດິບ 1,500 ໂຕນ/ປີ** (ຊາແຫ້ງປະມານ 300 ໂຕນ/ປີ)
- **ຈຳນວນຜູ້ໄດ້ຮັບຜົນປະໂຫຍດ:** 3,677 ຄົວເຮືອນ ໃນຫຼາຍກວ່າ100 ບ້ານ

ດ້ານການປຸງແຕ່ງ: ມີຄວາມຄືບໜ້າດີ

ເຟ :
- ຕິດຕັ້ງອຸປະກອນຄົບຊຸດ (ສູນປຸງແຕ່ງກາເຟທາງປຽກ 14 ແຫ່ງ)
- ແບບຊົ່ວຄາວ (ສູນປຸງແຕ່ງກາເຟທາງປຽກ 17 ແຫ່ງ)

ຊາ :
- ປັບປຸງໂຮງງານ 2 ແຫ່ງ (ເມືອງເມິງ ແລະ ເມືອງຍອດອູ)
- ໜ່ວຍປຸງແຕ່ງຂະໜາດນ້ອຍ 8 ແຫ່ງ

ການເຂົ້າເຖິງຕະຫຼາດ: ມີຄວາມຄືບໜ້າດີ

ເຟ
- ເປີດຕົວເວທີການຄ້າກາເຟ (ມີກຸ່ມຊາວສວນ 16 ກຸ່ມ ແລະ 4 ບໍລິສັດ ເຂົ້າຮ່ວມໃນໂຄງການທົດລອງ)
- ມີຜູ້ຊື້ 8 ລາຍ ທີ່ຈັດຊື້ກາເຟຈາກເຂດພື້ນທີ່ໂຄງການ

ຊາ:
- ສົ່ງອອກຊາຂຽວອໍແກນິກ 4.4 ໂຕນ ໄປປະເທດຝຣັ່ງ
- ເຊັນສັນຍາການຊື້-ຂາຍສະບັບໃໝ່ 2 ສະບັບ ກັບຜູ້ຊື້ຈາກ ສະຫະພາບເອີຣົບ (EU)

GREEN CUP











ການຄົ້ນຄວ້າ, ການສຶກສາ ແລະ ສ້າງລາຍຮັບ

GREEN CUP

ການຄົ້ນຄວ້າ ແລະ ນະວັດຕະກຳ	• ສວນກ້າເບ້ຍກາເຟ 3 ແຫ່ງ ແລະ ສວນສາທິດກາເຟ 15 ແຫ່ງ ເພື່ອສະໜັບສະໜຸນການທົດລອງກາເຟພັນປະສົມ 5 ສາຍພັນ (ຜົນການທົດລອງເບື້ອງຕົ້ນຊີ້ໃຫ້ເຫັນວ່າ ມີ 2 ສາຍພັນ ທີ່ມີການຈະເລີນເຕີບໂຕດີກວ່າສາຍພັນທ້ອງຖິ່ນ) • ສວນສາທິດຊາ 9 ແຫ່ງ ເພື່ອສະໜັບສະໜຸນລະບົບການປູກຊາແບບກະສິກຳປ່າໄມ້ (ປະສົມປະສານ)
ທັກສະ ແລະ ຊັບພະຍາກອນມະນຸດ	• ຈັດຊຸດອົບຮົມຫຼາຍກວ່າ 80 ຄັ້ງ ໃນປີ 2025 (ມີຜູ້ເຂົ້າຮ່ວມຫຼາຍກວ່າ 2,000 ທ່ານ, ໃນນັ້ນ 34% ແມ່ນແມ່ຍິງ), ເຊິ່ງລວມມີ ຊາວກະສິກອນ, ພະນັກງານສົ່ງເສີມ, ແລະ ພາກສ່ວນກ່ຽວຂ້ອງຈາກພາກລັດ. • ຊຸດເອກະສານຄວາມຮູ້ 6 ຊຸດ ແລະ ຫຼັກສູດການຮຽນ-ການສອນກາເຟໃໝ່ ສຳລັບນັກສຶກສາປະລິນຍາຕີ (ຈະເປີດໃຫ້ໃຊ້ງານຜ່ານລະບົບອອນລາຍໃນປີ 2026). • ສະໜັບສະໜຸນນັກສຶກສາປະລິນຍາເອກ 3 ທ່ານ ແລະ ສ້າງກຸ່ມຊ່ຽວຊານດ້ານກາເຟລະດັບຊາດ. • ຜູ້ຜະລິດແມ່ຍິງ ຫຼາຍກວ່າ 1,200 ທ່ານ ໄດ້ຮັບການອົບຮົມໃນໂຄງການຜູ້ນຳແມ່ຍິງ
ການສ້າງລາຍຮັບແບບຫຼາກຫຼາຍ	• ການຝຶກອົບຮົມການລ້ຽງເຜິ້ງ ໃຫ້ແກ່ຜູ້ຜະລິດຊາ ໃນແຂວງບໍ່ແກ້ວ. • ໂຄງການທົດລອງການລ້ຽງຄັ່ງ ແລະ ການປູກພືດສະໜຸນໄພ (ເຊໂກ້) ໃນສວນກາເຟ. • ແຜນງານລິເລີ່ມດ້ານການທ່ອງທ່ຽວແບບອະນຸລັກ (Eco-tourism).

ການຄົ້ນຄວ້າ, ການສຶກສາ ແລະ ສ້າງລາຍຮັບ

GREEN CUP



ສິ່ງ ທ້າທາຍ

GREEN CUP

ກາເຟ

- ການຄຸ້ມຄອງຂະແໜງການ ແລະ ກົດຈະກຳດ້ານຍຸດທະສາດ ມີຄວາມຄືບໜ້າຊ້າ ເນື່ອງຈາກມີສິ່ງທ້າທາຍໃນການປະສານງານລະຫວ່າງກະຊວງ (ຈຳເປັນຕ້ອງມີການປັບປຸງໂຄງສ້າງຂອງ ຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ (ຄສກ) ຄືນໃໝ່);
- ຜົນຜະລິດ ແລະ ການຈະເລີນເຕີບໂຕຂອງພືດ ໄດ້ຮັບຜົນກະທົບຈາກໄພແຫ້ງແລ້ງ ແລະ ມົນລະພິດທາງອາກາດ;
- ກົດຈະກຳຫຼັງການເກັບກ່ຽວ ຍັງຄົງປະເຊີນກັບສິ່ງທ້າທາຍ ເນື່ອງຈາກຄວາມຕ້ອງການຂອງຜູ້ຊື້ ທີ່ນິຍົມຊື້ໝາກກາເຟສົດ (ແດງ) ຫຼາຍກວ່າກາເຟໝາກຂາວ;
- ໂຄງລ່າງພື້ນຖານດ້ານການປຸງແຕ່ງ ແລະ ຫຼັງການເກັບກ່ຽວ ຍັງບໍ່ພຽງພໍທີ່ຈະຮອງຮັບປະລິມານການຜະລິດທີ່ເພີ່ມຂຶ້ນ;
- ການແຂ່ງຂັນຈາກພືດເສດຖະກິດອື່ນໆ ທີ່ມີມູນຄ່າສູງ ຍັງຄົງສົ່ງຜົນກະທົບຕໍ່ປະລິມານການເກັບກ່ຽວ (ເຊິ່ງຍັງບໍ່ທັນສາມາດດຳເນີນການໄດ້ຢ່າງເຕັມກຳລັງ).

ຊາ

- ບໍ່ສາມາດຕອບສະໜອງປະລິມານການສົ່ງອອກຕາມຄວາມຕ້ອງການຂອງຜູ້ຊື້ໄດ້ ເນື່ອງຈາກການປະຕິບັດລະບົບການຄວບຄຸມຄຸນະພາບພາຍໃນ (Internal Control System) ທີ່ຍັງບໍ່ເຂັ້ມແຂງ ແລະ ພື້ນທີ່ການຜະລິດທີ່ຈຳກັດ ເຊິ່ງເຮັດໃຫ້ ເກີດມີການປົນເປື້ອນທາງເຄມີຈາກສວນປູກທີ່ຢູ່ໃກ້ຄຽງ (ໃນກໍລະນີການຜະລິດຊາອິນຊີ).
- ອຸປະກອນການປຸງແຕ່ງ ແລະ ໂຄງຮ່າງພື້ນຖານຫຼັງການເກັບກ່ຽວມີຈຳກັດ ເຮັດໃຫ້ບໍ່ສາມາດຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດ
- ການຊື້-ຂາຍຊາ ເປັນຮູບແບບໄລຍະສັ້ນ ແລະ ຍັງຂາຍແບບທົ່ວໄປ ເຊິ່ງມີຜູ້ຊື້ຈຳກັດ ແລະ ບໍ່ມີຍຸດທະສາດການຕະຫຼາດໄລຍະຍາວ. ຮູບແບບນີ້ ບໍ່ສາມາດເຂົ້າເຖິງຕະຫຼາດທີ່ຫຼາກຫຼາຍໄດ້ ເຊິ່ງເຮັດໃຫ້ຄວາມຢືດຢຸ່ນຂອງຂະແໜງຊາ ອ່ອນແອລົງ. ຜົນຜະລິດຊາດິບ ໄດ້ຮັບຜົນກະທົບ ເນື່ອງຈາກເກີດໄພແລ້ງ
- ຜົນຜະລິດຫຼຸດລົງຍ້ອນໄພແລ້ງ
- ສິ່ງທ້າທາຍໃນການເຂົ້າເຖິງຕະຫຼາດເອີຣົບ (ອຸປະສັກດ້ານພາສາ ແລະ ຂີດຄວາມສາມາດໃນການບໍລິຫານຈັດການດ້ານໂລຈິສຕິກທີ່ມີຈຳກັດ)
- ຂາດແຄນຊ່ຽວຊານດ້ານຊາພາຍໃນທ້ອງຖິ່ນ ເພື່ອຮັບປະກັນຄວາມຍືນຍົງຂອງຂະແໜງໃນໄລຍະຍາວ ແລະ ການຊ່ວຍເຫຼືອດ້ານເຕັກນິກ


ບູລິມະສິດທີ່ສຳຄັນ ສຳລັບປີ 2026

ກິດຈະກຳຂອງໂຄງການ: ສືບຕໍ່ເຮັດໃຫ້ມີຄວາມຄືບໜ້າໄປສູ່ໝາກຜົນທີ່ຄາດໄວ້, ໂດຍເນັ້ນໜັກໃສ່:

- *ປັບປຸງຄຸນນະພາບຂອງຜະລິດຕະພັນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການກວດສອບຍ້ອນກັບ ໂດຍຜ່ານການຍົກລະດັບ ຫ້ອໜ່ວຍປຸງແຕ່ງກາເຟ ແລະ ຊາ ໃນລະດັບຊຸມຊົນ ແລະ ລະດັບບ້ານ.*
- *ເລັ່ງຈັດຕັ້ງປະຕິບັດກິດຈະກຳ ແລະ ວຽກງານທີ່ກ່ຽວຂ້ອງກັບໂພຊະນາການ.*
- *ສ້າງຄວາມເຂັ້ມແຂງໃນການສ້າງຂີດຄວາມສາມາດ ໂດຍຜ່ານການພັດທະນາຊ່ຽວຊານທ້ອງຖິ່ນ ແລະ ການເຜີຍແຜ່ເອກະສານ ຄວາມຮູ້ ພ້ອມກັບສື່ການຮຽນ-ການສອນຕ່າງໆ.*
- *ເພີ່ມທະວີການຮ່ວມມືກັບຄູ່ຮ່ວມງານທີ່ສຳຄັນ, ລວມມີ STAF, KfW-RDP IV, FAO ແລະ ພາກສ່ວນກ່ຽວຂ້ອງອື່ນໆ.*
- ການສ້າງຍຸດທະສາດກາເຟລາວ ປີ 2026-2030 ແລະ ຈັດກອງປະຊຸມຄະນະກຳມະການກາເຟແຫ່ງຊາດ (CNCL).
- ການສຶກສາຄວາມເປັນໄປໄດ້ ເພື່ອຂະຫຍາຍພື້ນທີ່ໂຄງການ ໄປສູ່ແຂວງໄຊຍະບູລີ ແລະ ແຂວງຈຳປາສັກ

ການບໍລິຫານຈັດການໂຄງການ:

- ສະຫຼຸບການເຮັດບົດສະເໜີຂໍທຶນເພີ່ມເຕີມຈາກ ສະຫະພາບເອີຣົບ (EU) ຈຳນວນ 2 ລ້ານເອີໂຣ;
- ເຊັນສັນຍາເພີ່ມເຕີມທີ່ກ່ຽວຂ້ອງ 2 ສະບັບ (ລະຫວ່າງ EU–AFD ແລະ AFD–ກະຊວງການເງິນ);
- ລົງເຄື່ອນໄຫວເກັບກຳຂໍ້ມູນຄວາມເປັນໄປໄດ້ ໃນ 2 ແຂວງເປົ້າໝາຍກາເຟເພີ່ມເຕີມ ຄື: ແຂວງໄຊຍະບູລີ ແລະ ແຂວງຈຳປາສັກ.








ຂອບໃຈ

ນີ້ຄື Green CUP: ຄວາມຍືນຍົງຈາກເມັດ ສູ່ຈອກ

ບົດສະຫຼຸບຫຍໍ້:

ໂຄງການ Green CUP (TICAF ອົງປະກອບທີ 1: ດ້ານກະສິກຳ)

ຜົນສຳເລັດ ແລະ ສິ່ງທ້າທາຍທີ່ສຳຄັນ 2025

ກ. ຜົນສຳເລັດທີ່ສຳຄັນ

ໃນປີ 2025, ໂຄງການ Green CUP ໄດ້ກ້າວເຂົ້າສູ່ການຈັດຕັ້ງປະຕິບັດຢ່າງເຕັມຮູບແບບ. ຂະແໜງກາເຟມີຜົນສຳເລັດທີ່ໂດດເດັ່ນ ທັງດ້ານການຜະລິດ, ການຄົ້ນຄວ້າ, ການສ້າງຂີດຄວາມສາມາດດ້ານວິຊາການ ແລະ ການເຊື່ອມໂຍງຕະຫຼາດ. ໃນຂະນະດຽວກັນ, ກິດຈະກຳໃນຂະແໜງຊາ ທີ່ເຄີຍຊັກຊ້າໃນປີ 2024 ກໍ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຜົນສຳເລັດນ ເພື່ອວາງຮາກຖານໃຫ້ແກ່ການພັດທະນາໃນປີ 2026.

ການສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງ ແລະ ການພັດທະນາຂະແໜງການວຽກງານ

ການປະເມີນຂະແໜງກາເຟຢ່າງຄົບຖ້ວນໄດ້ສຳເລັດລົງ, ພ້ອມກັນນັ້ນກໍກຳລັງດຳເນີນການກະກຽມແຜນຍຸດທະສາດ 2026 - 2030 ເພື່ອນຳສະເໜີຕໍ່ກອງປະຊຸມກອງເລຂາຂອງຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ (CNCL) ໃນຕົ້ນປີ 2026. ຂະບວນການປຶກສາຫາລືກ່ຽວກັບການເຂົ້າເປັນສະມາຊິກໃນອົງການກາເຟສາກົນ (ICO) ຂອງ ສປປ ລາວ ໄດ້ສຳເລັດລົງແລ້ວ; ໃບສະໝັກ ແລະ ແຜນດຳເນີນງານຂັ້ນສຸດທ້າຍຈະໄດ້ຮັບການກະກຽມໃນປີ 2026. ໃນຂະແໜງຊາ, ໂຄງການໄດ້ສະໜັບສະໜູນຢ່າງຈິງຈັງໃນການພັດທະນາແຜນແມ່ບົດຊາແຫ່ງຊາດ ໂດຍການຮ່ວມມືກັບ ອົງການອາຫານໂລກ (FAO) ແລະ ກົມປຸກຝັງ /ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ແລະ ໄດ້ອຳນວຍຄວາມສະດວກໃນການປຶກສາຫາລືຂອງຜູ້ມີສ່ວນຮ່ວມຫຼາຍພາກສ່ວນ. ກອງປະຊຸມເຄືອຂ່າຍຊາຄັ້ງທີ 3 ໄດ້ເຕົ້າໂຮມເອົາພາກສ່ວນກ່ຽວຂ້ອງທັງໝົດ 128 ທ່ານ, ເຊິ່ງລວມມີ ບັນດາບໍລິສັດ, ສະຫະກອນ, ອົງການຈັດຕັ້ງສາກົນ ແລະ ຕົວແທນຈາກພາກລັດຖະບານ ຈາກ 8 ແຂວງ.

ການພັດທະນາຕ່ອງໂສ້ມູນຄ່າ

<u>ດ້ານການຜະລິດ:</u> ເນື້ອທີ່ທັງໝົດທີ່ໄດ້ຮັບການສະໜັບສະໜູນຈາກໂຄງການບັນລຸເຖິງ 1,456 ເຮັກຕາ (ເນື້ອທີ່ກາເຟ 617 ເຮັກຕາ[1] ແລະ ເນື້ອທີ່ຊາ 839 ເຮັກຕາ[2]), ເຊິ່ງສ້າງຜົນປະໂຫຍດໃຫ້ແກ່ 3,677 ຄົວ

[1] ໃນປີ 2025 ໄດ້ປູກໃໝ່ 257 ເຮັກຕາ ແລະ ມີແຜນຈະປູກຕື່ມອີກ 246 ເຮັກຕາ ໃນປີ 2026.

[2] ເນື້ອທີ່ 316 ເຮັກຕາ ແມ່ນໄດ້ມາຈາກການສ້າງຕັ້ງສະຫະກອນຊາໃໝ່ຢູ່ແຂວງຊຽງຂວາງ ແລະ ການຂະຫຍາຍເນື້ອທີ່ການຜະລິດຂອງສະມາຊິກສະຫະກອນທີ່ມີຢູ່ແລ້ວ

ເຮືອນ[3] ໃນຫຼາຍກວ່າ 100 ບ້ານ. ຕິວເລກນີ້ກວມເອົາປະມານ 20% ຂອງເນື້ອທີ່ການຜະລິດກາເຟໃນ ພາກເໜືອຂອງລາວ ແລະ 40% ຂອງເນື້ອທີ່ປູກຊາໃນ 3 ແຂວງເປົ້າໝາຍ (ຜົ້ງສາລີ, ບໍ່ແກ້ວ ແລະ ຊຽງ ຂວາງ). ສິ່ງນີ້ໄດ້ສະແດງໃຫ້ເຫັນເຖິງການປະກອບສ່ວນອັນສຳຄັນເຂົ້າໃນການຫັນປ່ຽນ ແລະ ພັດທະນາ ຂະແໜງກາເຟ ແລະ ຊາ ຢູ່ພາກເໜືອຂອງລາວ, ພ້ອມທັງເປັນການຢືນຢັນຄືນເຖິງບົດບາດຂອງພາກພື້ນນີ້ ໃນການເປັນສູນກາງການຜະລິດທີ່ພົ້ນເດັ່ນ.

ຜົນຜະລິດກາເຟໃນລະດູເກັບກ່ຽວປີ 2025–2026 ຄາດຄະເນວ່າຈະບັນລຸ 132 ໂຕນ (ໝາກກາເຟໝາກ ແດງ) ແລະ ຄາດວ່າຈະເພີ່ມຂຶ້ນເປັນຫຼາຍກວ່າ 800 ໂຕນ ໃນປີ 2028, ເຊິ່ງທຽບເທົ່າກັບການເຟໝາກ ຂຽວ ປະມານ 120 ໂຕນຕໍ່ປີ. ສ່ວນຜົນຜະລິດຊາປະຈຳປີຈາກເນື້ອທີ່ທີ່ມີຢູ່ໃນປັດຈຸບັນ ແມ່ນປະມານ 300 ໂຕນ (ຊາແຫ້ງ)[4] ຫລື 1,500 ໂຕນ (ຊາດິບ).

<u>ວຽກງານຫຼັງການເກັບກ່ຽວ:</u> ຂີດຄວາມສາມາດໃນການປຸງແຕ່ງກໍ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ. ໃນນັ້ນ, ສູນ ປຸງແຕ່ງກາເຟ (wet mill) ຈຳນວນ 14 ແຫ່ງ ແມ່ນໄດ້ຕິດຕັ້ງອຸປະກອນຢ່າງຄົບຊຸດ, ໃນຂະນະທີ່ອີກ 17 ສູນປຸງແຕ່ງຊື່ວຄາວ ແມ່ນມີແຜນຈະຕິດຕັ້ງໃຫ້ສົມບູນໃນໄລຍະປີ 2026–2027. ສຳລັບຂະແໜງຊາ, ໂຮງງານ 2 ແຫ່ງ ແລະ 8 ຫ້ອງຫນ່ວຍປຸງແຕ່ງຊາຂະໜາດນ້ອຍ ໄດ້ຮັບການປັບປຸງຍົກລະດັບ ເພື່ອໃຫ້ໄດ້ ມາດຕະຖານດ້ານປະລິມານ ແລະ ຄຸນນະພາບຕາມຄວາມຕ້ອງການຂອງຕະຫຼາດ ພາຍໃນ ແລະ ສາກົນ.

<u>ການເຂົ້າເຖິງຕະຫຼາດ:</u> ການເຊື່ອມໂຍງດ້ານການຕະຫຼາດ ແລະ ການສ້າງຊື່ສຽງຂອງ ກາເຟ ແລະ ຊາລາວ ໃຫ້ເປັນທີ່ຮູ້ຈັກ ແມ່ນໄດ້ຮັບການເສີມສ້າງໃຫ້ເຂັ້ມແຂງຂຶ້ນ ໂດຍຜ່ານກິດຈະກຳສົ່ງເສີມດ້ານການຄ້າທັງ ພາຍໃນ ແລະ ສາກົນ ທີ່ຈັດຂຶ້ນຕະຫຼອດປີ 2025, ເຊິ່ງລວມມີ ກິດຈະກຳສົ່ງເສີມການຄ້າພາຍໃນປະເທດ 3 ຄັ້ງ ແລະ ສາກົນ 4 ຄັ້ງ.

ເວທີການຄ້າຂາຍ (Commercial platform) ໄດ້ຖືກສ້າງຕັ້ງຂຶ້ນ ເພື່ອເຊື່ອມໂຍງກຸ່ມຊາວກະສິກອນ 16 ກຸ່ມ ເຂົ້າກັບ 4 ບໍລິສັດເອກະຊົນ. ນອກຈາກນັ້ນ, ຍັງມີຜູ້ຊື້ 8 ລາຍ ທີ່ໄດ້ເຊື່ອມໂຍງກັບຜູ້ຜະລິດກາເຟໃນ ບັນດາແຂວງເປົ້າໝາຍ ແລະ ໄດ້ຮັບຊື້ກາເຟໂດຍກົງຈາກເຂດພື້ນທີ່ ທີ່ໂຄງການໃຫ້ການສະໜັບສະໜູນ.

ສຳລັບສະຫະກອນຊາເມືອງເມິງ ຢູ່ແຂວງບໍ່ແກ້ວ ແມ່ນຍັງສືບຕໍ່ຮັກສາທ່າແຮງໃນການສົ່ງອອກໄປຫາຜູ້ຊື້ ໃນເອີຣົບຢ່າງຕໍ່ເນື່ອງ. ຊາຂຽວ ທີ່ໄດ້ຮັບການຢັ້ງຢືນກະຊິກຳອິນຊີສາກົນ (ອໍແກນິກ) ຈຳນວນ 4.4 ໂຕນ ຈາກແຂວງບໍ່ແກ້ວ ໄດ້ຖືກສົ່ງອອກໄປປະເທດຝຣັ່ງ ແລະ ໄດ້ມີການເຊັນສັນຍາຊື້-ຂາຍສະບັບໃໝ່ 2 ສະບັບ. ພ້ອມກັນນີ້, ຍັງໄດ້ມີການສົ່ງຕົວຢ່າງຜະລິດຕະພັນ ເພື່ອຮັບປະກັນການເຮັດສັນຍາຊື້-ຂາຍ ສຳລັບ ປີ 2026 ອີກດ້ວຍ.

ການສ້າງຄວາມຮູ້, ທັກສະ ແລະ ຊັບພະຍາກອນມະນຸດ:

ໃນປີ 2025, ໄດ້ມີການຈັດຝຶກອົບຮົມຫຼາຍກວ່າ 80 ຊຸດ, ເຊິ່ງມີຜູ້ເຂົ້າຮ່ວມຫຼາຍກວ່າ 2,000 ທ່ານ (ໃນ ນັ້ນມີແມ່ຍິງ 34%), ລວມມີ ຊາວກະສິກອນ, ພະນັກງານສົ່ງເສີມເຕັກນິກ ແລະ ພາກສ່ວນກ່ຽວຂ້ອງຈາກ

[3] ຜູ້ຜະລິດກາເຟ 1,458 ຄົວເຮືອນ ແລະ ຜູ້ຜະລິດຊາ 2,219 ຄົວເຮືອນ.

[4] ຄາດຄະເນຜົນຜະລິດຊາແຫ້ງ = 839 ເຮັກຕາ × 0.4 = 335.6 ໂຕນຕໍ່ປີ.

ພາກສ່ວນຕ່າງໆ. ຫົວຂໍ້ການຝຶກອົບຮົມລວມມີ ເຕັກນິກການປູກຝັງ, ການຄຸ້ມຄອງສະຫະກອນ ແລະ ທັກສະດ້ານການຕະຫຼາດ.

ຊຸດຄວາມຮູ້ສຳລັບການຝຶກອົບຮົມວິຊາຊີບຈຳນວນ 6 ຊຸດ ແມ່ນຢູ່ໃນຂັ້ນຕອນການກວດກາຄືນຂັ້ນສຸດທ້າຍ ແລະ ຈະຖືກເຜີຍແຜ່ຜ່ານລະບົບດີຈີຕອນໃນປີ 2026. ນອກຈາກນີ້, ຍັງໄດ້ມີການກະກຽມຫຼັກສູດການຮຽນ-ການສອນກາເຟໃໝ່ ສຳລັບນັກສຶກສາລະດັບປະລິນຍາຕີ (BSc).

ໂຄງການຍັງໄດ້ລົງທຶນເຂົ້າໃນການພັດທະນາຂີດຄວາມສາມາດໃນໄລຍະຍາວ, ເຊິ່ງປັດຈຸບັນໄດ້ໃຫ້ການສະໜັບສະໜູນນັກສຶກສາລະດັບປະລິນຍາເອກ (PhD) ຈຳນວນ 3 ທ່ານ. ນອກຈາກນີ້, ຍັງມີແຜນທີ່ຈະໃຫ້ການສະໜັບສະໜູນນັກສຶກສາລະດັບປະລິນຍາເອກ ແລະ ປະລິນຍາໂທຕື່ມອີກໃນປີຕໍ່ໜ້າ. ພ້ອມກັນນີ້, ຍັງໄດ້ມີການສ້າງຕັ້ງຄະນະຜູ້ຊ່ຽວຊານລະດັບຊາດດ້ານກາເຟຂຶ້ນອີກດ້ວຍ.

ການສົ່ງເສີມການວິໄຈ ແລະ ນະວັດຕະກຳ:

ໄດ້ມີການສ້າງຕັ້ງສວນກ້າເບ້ຍກາເຟ 3 ແຫ່ງ ແລະ ສວນສາທິດກາເຟ 15 ແຫ່ງ ຢູ່ແຂວງຫຼວງພະບາງ ແລະ ແຂວງຊຽງຂວາງ ເພື່ອຮອງຮັບການທົດລອງກາເຟສາຍພັນປະສົມ (Hybrid) 5 ສາຍພັນ[5]. ຜົນການທົດລອງໃນເບື້ອງຕົ້ນຊີ້ໃຫ້ເຫັນວ່າ ສາຍພັນ Mundo Maya ແລະ Centro Americano ມີອັດຕາການຈະເລີນເຕີບໂຕທີ່ດີກວ່າສາຍພັນທ້ອງຖິ່ນ (Arabica Catimor). ການທົດລອງນີ້ຈະເປັນຂໍ້ມູນສຳຄັນໃນການພັດທະນາຍຸດທະສາດການຜະລິດທີ່ສາມາດປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.

ນອກຈາກນີ້, ຍັງໄດ້ສ້າງຕັ້ງສວນສາທິດຊາ 9 ແຫ່ງ ຢູ່ແຂວງຊຽງຂວາງ ແລະ ແຂວງຜົ້ງສາລີ ໂດຍອີງຕາມການສຶກສາດ້ານການບໍລິການທາງລະບົບນິເວດ (Ecosystem service). ການທົດລອງນີ້ຈະຊ່ວຍສະໜັບສະໜູນການພັດທະນາລະບົບການປູກຊາແບບກະສິກຳປ່າໄມ້ (Agroforestry).

ໃນທົ່ວພາກເໜືອຂອງລາວ, ໄດ້ມີການສ້າງຕັ້ງສວນສາທິດ (ທັງກາເຟ ແລະ ຊາ) ລວມທັງໝົດ 33 ແຫ່ງ, ກວມເອົາເນື້ອທີ່ 14.5 ເຮັກຕາ ແລະ ມີຄົວເຮືອນເຂົ້າຮ່ວມ 34 ຄົວເຮືອນ. ສວນສາທິດເຫຼົ່ານີ້ ຈະເປັນຕົວແບບໃນພາກປະຕິບັດຕົວຈິງ ສຳລັບການເຮັດກະສິກຳແບບນະວັດຕະກຳ ທີ່ສາມາດປັບຕົວຕໍ່ການປ່ຽນແປງດິນຟ້າອາກາດໄດ້ດີ.

ການສ້າງລາຍຮັບທີ່ຫຼາກຫຼາຍ: ໂຄງການໄດ້ລິເລີ່ມການສ້າງລາຍຮັບທີ່ຫຼາກຫຼາຍ ເພື່ອຫຼຸດຜ່ອນຄວາມສ່ຽງທາງດ້ານເສດຖະກິດ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຄົວເຮືອນ ໂດຍຜ່ານການສ້າງແຫຼ່ງລາຍຮັບທີ່ແຕກຕ່າງກັນ. ກິດຈະກຳໃນປີ 2025 ລວມມີ: ການຝຶກອົບຮົມການລ້ຽງເຜິ້ງໃຫ້ແກ່ຜູ້ຜະລິດຊາຢູ່ແຂວງບໍ່ແກ້ວ, ການທົດລອງລ້ຽງຄັ່ງ ແລະ ການປູກພືດສະໝຸນໄພ (Seiko) ໃນສວນກາເຟ ໂດຍການຮ່ວມມືກັບບໍລິສັດເອກະຊົນ ຢູ່ແຂວງຫຼວງພະບາງ ແລະ ແຂວງຈຳປາສັກ. ນອກຈາກນັ້ນ, ຍັງໄດ້ມີການລິເລີ່ມກິດຈະກຳດ້ານການທ່ອງທ່ຽວແບບອະນຸລັກ (Eco-tourism) ອີກດ້ວຍ.

[5] ສາຍພັນ Starmaya, Marsellesa, Centro Americano, Mundo Maya, ແລະ Mariana.

ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ: ໃນລະຫວ່າງປີ 2024 ຫາ 2025, ມີຜູ້ຜະລິດເພດຍິງ ຫຼາຍກວ່າ 1,200 ທ່ານ ໄດ້ຮັບການຝຶກອົບຮົມຜ່ານ "ແຜນງານຜູ້ນຳແມ່ຍິງ" (Women Leaders Programme) ໂດຍການນຳໃຊ້ຮູບແບບການມີສ່ວນຮ່ວມ. ຄວາມພະຍາຍາມເຫຼົ່ານີ້ ໄດ້ຊ່ວຍສ້າງຄວາມເຂັ້ມແຂງໃຫ້ແກ່ບົດບາດຂອງແມ່ຍິງ ທັງໃນດ້ານການຜະລິດ, ການເປັນຜູ້ນຳ ແລະ ການມີສ່ວນຮ່ວມໃນດ້ານການຕະຫຼາດ ພາຍໃນຕ່ອງໂສ້ມູນຄ່າກາເຟ.

ຂ. ສິ່ງທ້າທາຍທີ່ສຳຄັນ

ຂະແໜງກາເຟ:

- ກິດຈະກຳສະໜັບສະໜູນການຄຸ້ມຄອງຈັດການຂະແໜງກາເຟ ແລະ ກິດຈະກຳທາງຍຸດທະສາດ ຍັງມີຄວາມຄືບໜ້າຊ້າ ເນື່ອງຈາກຄວາມທ້າທາຍໃນການປະສານງານລະຫວ່າງກະຊວງ, ເຊິ່ງ ຈຳເປັນຕ້ອງໄດ້ມີການປັບປຸງໂຄງສ້າງຂອງກົນໄກທີ່ມີຢູ່ (ກອງເລຂາ CNCL ແລະ ຄະນະ ກຳມະການ CNCL).
- ສະພາບອາກາດທີ່ມີຄວາມຜັນຜວນເພີ່ມຂຶ້ນ (ໂດຍສະເພາະແມ່ນໄພແຫ້ງແລ້ງ ແລະ ມົນລະພິດ ທາງອາກາດ) ໃນໄລຍະການຜະລິດທີ່ສຳຄັນ (ເຊັ່ນ: ໄລຍະກາເຟອອກດອກ) ສົ່ງຜົນກະທົບຕໍ່ຜົນ ຜະລິດ ແລະ ການຈະເລີນເຕີບໂຕຂອງພືດ (ເນື້ອທີ່ປູກເພີ່ມຂຶ້ນ ແຕ່ຜົນຜະລິດຫຼຸດລົງ).
- ມີຄວາມຫຍຸ້ງຍາກໃນການສົ່ງເສີມກິດຈະກຳການປຸງແຕ່ງ ເນື່ອງຈາກຄວາມຕ້ອງການຂອງຜູ້ຊື້ບາງ ລາຍ (ທີ່ນິຍົມຊື້ກາເຟໝາກແດງ ຫຼາຍກວ່າກາເຟໝາກຂາວ).
- ພື້ນຖານໂຄງລ່າງດ້ານການປຸງແຕ່ງ ແລະ ຫຼັງການເກັບກ່ຽວ ຍັງບໍ່ທັນພຽງພໍທີ່ຈະຮອງຮັບ ປະລິມານການຜະລິດທີ່ເພີ່ມຂຶ້ນ ແລະ ເພື່ອຮັບປະກັນໃຫ້ໄດ້ມາດຕະຖານດ້ານຄຸນນະພາບ.
- ການຜະລິດກາເຟຢູ່ພາກເໜືອຂອງລາວ ຍັງມີການແຂ່ງຂັນກັບພືດເສດຖະກິດອື່ນໆທີ່ມີລາຄາ ຕະຫຼາດສູງ, ເຊິ່ງສົ່ງຜົນກະທົບຕໍ່ປະລິມານການເກັບກ່ຽວ (ຍັງບໍ່ທັນສາມາດຜະລິດໄດ້ເຕັມຂີດ ຄວາມສາມາດ).

ຂະແໜງຊາ:

- ບໍ່ສາມາດຕອບສະໜອງປະລິມານການສົ່ງອອກຕາມຄວາມຕ້ອງການ ຂອງຜູ້ຊື້ໄດ້ ເນື່ອງຈາກການ ປະຕິບັດລະບົບການຄວບຄຸມຄຸນະພາບພາຍໃນ (Internal Control System) ທີ່ຍັງບໍ່ ເຂັ້ມແຂງ ແລະ ພື້ນທີ່ການຜະລິດທີ່ຈຳກັດ ເຊິ່ງເຮັດໃຫ້ ເກີດມີການປົນເປື້ອນທາງເຄມີຈາກສວນ ປູກທີ່ຢູ່ໃກ້ຄຽງ (ໃນກໍລະນີການຜະລິດຊາອິນຊີ).
- ອຸປະກອນການປຸງແຕ່ງ ແລະ ພື້ນຖານໂຄງລ່າງຫຼັງການເກັບກ່ຽວມີຈຳກັດ ບໍ່ສາມາດຕອບສະໜ ອງໄດ້ຕາມມາດຕະຖານ ແລະ ຄວາມຕ້ອງການຂອງຕະຫຼາດສົ່ງອອກ.

- ການຊື້-ຂາຍຊາ ເປັນຮູບແບບໄລຍະສັ້ນ ແລະ ຍັງຂາຍແບບທົ່ວໄປ ເຊິ່ງມີຜູ້ຊື້ຈຳກັດ ແລະ ບໍ່ມີຍຸດທະສາດການຕະຫຼາດໄລຍະຍາວ. ຮູບແບບນີ້ ບໍ່ສາມາດເຂົ້າເຖິງຕະຫຼາດທີ່ຫຼາກຫຼາຍໄດ້ ເຊິ່ງເຮັດໃຫ້ຄວາມຢືດຢຸ່ນຂອງຂະແໜງຊາ ອ່ອນແອລົງ.
- ຜົນຜະລິດໄດ້ຮັບຜົນກະທົບ ເນື່ອງຈາກການປ່ຽນແປງສະພາບພູມອາກາດ (ໂດຍສະເພາະແມ່ນໄພແຫ້ງແລ້ງ) ໃນລະດູເກັບກ່ຽວຊາລະດູໃບໄມ້ປົ່ງ.
- ຍັງມີອຸປະສັກທາງດ້ານພາສາ ແລະ ການບໍລິຫານຈັດການດ້ານໂລຈິສຕິກ ໃນການສົ່ງອອກໄປຕະຫຼາດເອີຣົບ.
- ຂາດແຄນຜູ້ຊ່ຽວຊານຊາສະເພາະ ຂັ້ນທ້ອງຖິ່ນ ເພື່ອຮັບປະກັນຄວາມຍືນຍົງຂອງຂະແໜງການ



ໂຊລາ II

ການຫຼຸດຜ່ອນຄວາມສ່ຽງໃນ ສປປ ລາວ:

ການສ້າງຄວາມກ້າວໜ້າໃຫ້ແກ່ລະບົບປົກປ້ອງສັງຄົມ ແລະ ສິດທິດ້ານແຮງງານສຳລັບຊາວກະສິກອນໃນຂະ ແໜງກາເຟ, ຊາ ແລະ ປ່າໄມ້ - ໄລຍະທີ II

ວັນທີ 13 ພຶດສະພາ 2026

International Labour Organization

SOLAR II: ຂໍ້ມູນກ່ຽວກັບໂຄງການ


- **ໄລຍະເວລາ:** ເດືອນ ກຸມພາ 2026-ເດືອນ ເມສາ 2030
- **ງົບປະມານ:** 3.5 ລ້ານເອີໂຣ
- **ຈຸດປະສົງສະເພາະ:** ເພື່ອສົ່ງເສີມ ແລະ ປົກປ້ອງສິດທິແຮງງານ, ດ້ວຍການປັບປຸງການເຂົ້າເຖິງການປົກປ້ອງສັງຄົມ ແລະ ຄວາມປອດໄພ ແລະ ສຸຂະພາບແຮງງານ, ການປັບປຸງການ ຈັດຕັ້ງ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແຮງງານໃນຂະ ແໜງກາເຟ, ຊາ ແລະ ປ່າໄມ້ໃນ ສປປ ລາວ





ພື້ນທີ່ເປົ້າໝາຍ SOLAR II

16 ເມືອງໃນ 7 ແຂວງ:
ຜົ້ງສາລີ, ຫຼວງນ້ຳທາ, ຫຼວງພະບາງ,ຫົວພັນ,ຊຽງຂວາງ, ຄຳມ່ວນ, ແຂວງວຽງຈັນ



ໂຊລາ II: ເປົ້າໝາຍຜູ້ໄດ້ຮັບຜົນປະໂຫຍດ ແລະ ຄູ່ຮ່ວມງານ

- ຊາວບ້ານໃນຊຸມຊົນເປົ້າໝາຍ ຈຳນວນ **32,000 ຄົນ**: ເນັ້ນໜັກແຮງງານນອກລະບົບ ແລະ ແມ່ຍິງ (ແມ່ຍິງ 50%, ຊົນເຜົ່າ 25%)
- **ລັດຖະບານ** - ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, ອົງການປະກັນສັງຄົມແຫ່ງຊາດ ແລະ ຫ້ອງການໃນຂັ້ນທ້ອງຖິ່ນ, ສູນຄົ້ນຄ້ວາກະສິກຳພາກໃຕ້, ກະຊວງທີ່ກ່ຽວຂ້ອງ ຕ່າງໆ
- **ຜູ້ອອກແຮງງານ** - ສູນກາງສະຫະພັນກຳມະບານລາວ ແລະ ຫ້ອງການໃນຂັ້ນທ້ອງຖິ່ນ, ສະຫະກອນ, ກຸ່ມຜະລິດ
- **ພາກເອກະຊົນ** - ສະພາການຄ້າ ແລະ ອຸດສາກະກຳແຫ່ງຊາດລາວ ແລະ ຫ້ອງການໃນຂັ້ນທ້ອງຖິ່ນ, ສະມາຄົມກາເຟລາວ, ສະມາຄົມ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ
- ອົງການຈັດຕັ້ງທາງສັງຄົມ ຈຳນວນ 6 ອົງການ
- ອຳນາດການປົກຄອງ (ບ້ານ/ກຸ່ມ) ຈຳນວນ **128** ທ່ານ

ກິດຈະກຳໂຄງການ

ຜົນໄດ້ຮັບ 1. ມີມາດຕະການເພື່ອເສີມຂະຫຍາຍການບັງຄັບໃຊ້ກົດໝາຍໃນລະດັບທ້ອງຖິ່ນ



- - ການບໍລິການປະກັນສັງຄົມເຄື່ອນທີ່, ການກວດກາປະກັນສັງຄົມໃນພາກວິສາຫະກິດ
- - ຝຶກອົບຮົມຄູຝຶກ
- - ການສົນທະນາປຶກສາຫາລືລະຫວ່າງຜູ້ອອກແຮງງານ ແລະ ນາຍຈ້າງ/ຜູ້ຊື້



ILO report

SOLAR: Report of the endline study



ຜົນໄດ້ຮັບ 2. ໃຫ້ຄຳແນະນຳສຳລັບການປ່ຽນແປງດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ



- ມີການສະໜອງຄຳຄິດເຫັນກ່ຽວກັບ ຊ່ອງຫວ່າງ, ອຸປະສັກ ແລະ ສິ່ງທ້າທາຍໃຫ້ແກ່ຂະບວນການສ້າງ/ປັບປຸງນະໂຍບາຍ, ເວທີລະດັບຊາດ

ກິດຈະກຳໂຄງການ



ຜົນໄດ້ຮັບ 3. ເພີ່ມຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບການປົກປ້ອງທາງສັງຄົມ ແລະ ສິດທິດ້ານແຮງງານໃຫ້ແກ່ຜູ້ອອກແຮງງານ

- - ການໂຄສະນາປະຊາສຳພັນໃນລະດັບບ້ານ



ຜົນໄດ້ຮັບ 4. ເສີມສ້າງຄວາມອາດສາມາດຂອງຄູ່ຮ່ວມງານໃນຂັ້ນທ້ອງຖິ່ນ

- - ຝຶກອົບຮົມຄູຝຶກໃຫ້ແກ່ອົງການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງມະຫາຊົນ, ສະຫະກອນ, ກຸ່ມຜູ້ອອກແຮງງານ



ຜົນໄດ້ຮັບ 5. ປັບປຸງການຈັດຕັ້ງ ແລະ ການມີສ່ວນຮ່ວມຂອງຜູ້ອອກແຮງງານເພດຍິງໃຫ້ດີຂຶ້ນ

- -ການຝຶກອົບຮົມບົດບາດຍິງ-ຊາຍໂດຍການນຳໃຊ້ເຄື່ອງມືລະບົບຮຽນຮູ້ການປະຕິບັດຕົວຈິງ ເພື່ອສົ່ງເສີມຄວາມເປັນຜູ້ນຳຂອງແມ່ຍິງ
- -ການປູກຈິດສຳນຶກກ່ຽວກັບບັນທັດຖານ ແລະ ບົດບາດຍິງ-ຊາຍ



ຂໍຂອບໃຈ !